ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ
≈≈໙໙ ❖ ໑໑≈≈

ກະຊວງກະສິກຳ-ປ່າໄມ້
ກົມສົ່ງເສີມກະສິກຳ ແລະ ສະຫະກອນ

# ບົດລາຍງານ

## ຜົນການສຶກສາກ່ຽວກັບສະພາບຂອງສະຫອນໃນ ສປປລາວ.







# ບົດສັດຫຍໍ້

ໃນບົດລາຍງານສະບັບນີ້ໄດ້ສັງລວມຫຍໍ້ຜົນການສຶກສາຂໍ້ມູນເບື້ອງຕົ້ນຂອງບັນດາສະຫະກອນຜະລິດກະສິກໍາ 7 ຫົວໜ່ວຍຢູ່ແຂວງຈໍາປາສັກ ແລະແຂວງຊຽງຂວາງ. ການເກັບກໍາຂໍ້ມູນຄັ້ງນີ້ແມ່ນຜ່ານການສົນທະນາ ພົບປະກັບບັນດາຂະແໜງການທີ່ກ່ຽວຂ້ອງ ພາຍໃນແຂວງ ແລະ ເມືອງ, ຄະນະບໍລິຫານ ແລະ ສະມາຊິກສະຫະກອນ ເລີ້ມແຕ່ວັນ 29/8/-3/9/2016

ການສຶກສາຂໍ້ມູນແມ່ນໄດ້ລົງເລິກກ່ຽວກັບການກໍາເນີດຂອງສະຫະກອນໃນ ສປປ ລາວ, ໂຄງປະກອບການຈັດຕັ້ງສະຫະກອນ, ການກໍານົດສິດ ແລະ ໜ້າທີ່ຂອງຄະນະບໍລິຫານ ແລະ ສາມະຊິກ, ການຄຸ້ມຄອງ, ການຈັດການດ້ານການເງິນ ແລະ ການສະໜັບສະໜູນຕ່າງໆຈາກພາກສ່ວນທີ່ກ່ຽວຂ້ອງ ລວມທັງບັນດາໂອກາດ,ບັນຫາ ແລະ ຄວາມສ່ຽງຂອງສະຫະກອນ,

ຜ່ານການສຶກສາ ສາມາດສະຫຼຸບໄດ້ວ່າ ມາຮອດປະຈຸບັນນີ້ ສະຫະກອນຢູ່ໃນ ສປປ ລາວ ຍັງເປັນການປະສົມປະສານ ລະຫວ່າງ ສອງຮູບແບບ ຄື: ສະຫະກອນການຜະລິດກະສິກໍາ-ປ່າໄມ້ ແລະ ສະຫະກອນບໍລິການດ້ານ ການຄ້າ ແລະ ການເງິນ ແຕ່ທັງສອງຮູບແບບຍັງເຮັດບໍ່ທັນໄດ້ດີ ແລະບໍ່ເປັນລະບົບເທື່ອ. ການຈັດຕັ້ງສະຫະກອນຕ້ອງໄດ້ຮັບການຊ່ວຍເຫລືອຈາກພາກສ່ວນທີ່ກ່ຽວຂ້ອງ ເປັນຕົ້ນແມ່ນການແນະນໍາ ແລະ ຊ່ວຍເຫລືອດ້ານການຄຸ້ມຄອງບໍລິຫານ, ການຈັດການດ້ານການຕະຫລາດ, ການເຂົ້າຫາແຫລ່ງທຶນຕ່າງໆ. ບັນຫາຕົ້ນຕໍ່ຂອງບັນດາສະຫະກອນຕ່າງໆ ທີ່ມີການສຶກສາໃນຄັ້ງນີ້ ທີມງານໄດ້ພົບເຫັນບາງຂໍ້ຄົງຄ້າງທີ່ເປັນອຸປະສັກໃນການຈັດຕັ້ງປະຕິບັດວຽກງານ ສະຫະກອນກະສິກໍາດັ່ງນີ້: 1) ສ່ວນຫລາຍເປັນສະຫະກອນທີ່ສ້າງຕັ້ງໃໝ່ ຄະນະບໍລິຫານ ຍັງຂາດປະສົບການໃນການບໍລິຫານຈັດການສະຫະກອນ , ສ້າງຂຶ້ນບົນພື້ນຖານການຊ່ວຍເຫຼືອຂອງໂຄງການ ເຊັ່ນ ການພົວພັນ ແລະ ຊອກຫາຕະຫຼາດຈໍາໜ່າຍຜົນຜະລິດກະສິກໍາຂອງສະມາຊິກສະຫະກອນບໍ່ແນ່ນອນ, ຂາດບົດລາຍງານ, 2) ສະຫະກອນຜະລິດກະສິກໍາ ຍັງຂາດແຫລ່ງທຶນໃນການດໍາເນີນກິດຈະກໍາຂອງສະຫະກອນ,

ບົດລາຍງານສະບັບນີ້ ເປັນພຽງຂໍ້ມູນເບື້ອງຕົ້ນທີ່ເປັນບ່ອນອີງສໍາລັບການປຶກສາຫາລື ເພື່ອຊອກຫາຊ່ອງທາງ, ຮູບແບບ ແລະ ວິທີການທີ່ເໝາະສົມໃນການຄຸ້ມຄອງ ແລະ ສົ່ງເສີມການຈັດຕັ້ງ ແລະ ເຄື່ອນໄຫວຂອງສະຫະກອນໃຫ້ປະສົບຜົນສໍາເລັດ ແລະ ມີຄວາມຍືນຍົງໃນອານາຄົດ. ອີງໃສ່ໄລຍະເວລາມີຈໍາກັດຍັງບໍ່ທັນລະອຽດ, ສະນັ້ນ ຄວນໄດ້ມີການສຶກສາລະອຽດເພີ້ມຕື່ມອີກ, ວ່າແຕ່ລະຫະກອນຈະມີການປັບປຸງໃນຂອດໃດ, ສ່ວນລາຍລະອຽດຕ່າງໆ ທ່ານສາມາດເບິ່ງໄດ້ໃນບົດລາຍງານນີ້.

ທ້າຍນີ້ ພວກຂ້າພະເຈົ້າ ແລະ ທີມງານສຶກສາຂໍ້ມູນຂໍອະໄພມາຍັງທຸກທ່ານ ຖ້າວ່າເນື້ອໃນການສັງລວມລາຍງານຍັງບໍ່ທັນຄົບຖ້ວນ ລວມທັງການນໍາໃຊ້ຄວາມເວົ້າບໍ່ສອດຄ່ອງ ແລະ ຫວັງວ່າຍິ່ງວ່າທ່ານຈະໃຫ້ອະໄພ ພ້ອມທັງຊ່ວຍໃນການແນະນໍາ ປັບປຸງເພື່ອເຮັດໃຫ້ບົດລາຍງານສະບັບນີ້ສົມບູນຂຶ້ນ.

**ຜູ້ສັງລວມລາຍງານ:** ທ່ານ ສົມບູນ ວົງເພັດ, ທ່ານ ພຸດທະສິນ ພົມມະຈັນ, ທ່ານ ພອນສະຫວັນ ແກ້ວອາສາ

**ກວດແກ້ໂດຍ:** ທ່ານ ສົມໄຊ ສີຊານົນ, ທ່ານ ຄໍາອ້ວນ ຄໍາພູແກ້ວ, ທ່ານ ສຸວັນທອງ ນາມວົງ

**ສະໜັບສະໜູນໂດຍ:**

ໂຄງການ MTCPII/AFOSP

# ສາລະບານ


1

1

ບົດສັດຫຍໍ້ 2

I. ຈຸດປະສົງຂອງການສຶກສາ 4

II. ວິທີການແລະເຄື່ອງມືໃນການສຶກສາ 4

III. ຜົນໄດ້ຮັບ 5

3.1 ການກຳເນີດ ແລະ ຄວາມສຳຄັນຂອງສະຫະກອນ 5

6

3.2 ຄວາມເປັນມາຂອງສະຫະກອນກະສິກຳຢູ່ໃນ ສປປ ລາວ 8

3.3 ປະເພດສະຫະກອນຢູ່ ລາວ 10

3.4 ໂຄງປະກອບການຈັດຕັ້ງສະຫະກອນ 10

3.5 ລະບົບການຄຸ້ມຄອງບໍລິຫານ ແລະຈັດການສະຫະກອນ 11

3.5.1 ຮູບການຈັດຕັ້ງ ສະຫະກອນຢູ່ ສປປ ລາວ ໃນປະຈຸບັນ. 11

3.5.2 ການຄຸ້ມຄອງດ້ານການເງິນ 12

3.6 ແຫຼ່ງທຶນຂອງສະຫະກອນ 12

3.7 ການຕະຫຼາດ 13

3.8 ຜົນປະໂຫຍດຕໍ່ສະມາຊິກ 14

IV. ການສະໜັບສະໜູນແກ່ການເຄື່ອນໄຫວຂອງສະຫະກອນໂດຍພາກສ່ວນຕ່າງໆ 15

4.1. ໂອກາດ ແລະ ສິ່ງທ້າທາຍໃຫ້ແກ່ສະຫະກອນຢູ່ໃນ ສປປ ລາວ 18

4.1.1 ໂອກາດໃນການພັດທະນາສະຫະກອນ 18

4.2 ບັນຫາແລະສິ່ງທ້າທາຍໃນການສ້າງຕັ້ງສະຫະກອນ 19

V. ສະຫຼຸບທ້າຍ 21

VI. ຂໍ້ສະເໜີແນະ ແລະ ແນວຄວາມຄິດໃນການສົ່ງເສີມວຽກງານສະຫະກອນໃນຕໍ່ໜ້າ. 22

## I. ຈຸດປະສົງຂອງການສຶກສາ

1. ສຶກສາປະຫວັດຄວາມເປັນມາ ແລະ ຂະບວນການການສ້າງຕັ້ງສະຫະກອນຕ່າງໆ ຢູ່ໃນ ສປປ ລາວ ຢູ່ໃນແຕ່ລະໄລຍະ (ການສ້າງຕັ້ງ ແລະ ການຈົດທະບຽນ)
2. ສຶກສາ ລະບົບການຈັດຕັ້ງຄຸ້ມຄອງຂອງສະຫະກອນ: ມີໂຄງຮ່າງການຈັດຕັ້ງແນວໃດ, ຄະນະບໍລິຫານໄດ້ມາຄືແນວໃດ, ມີລະບົບການຕັດສິນໃຈແນວໃດ, ສະມາຊິກມີສ່ວນຮ່ວມແນວໃດໃນການດຳເນີນທິດທາງການພັດທະນາການຈັດຕັ້ງ, ເງື່ອນໄຂການເປັນສະມາຊິກ ແລະ ອື່ນໆ
3. ສຶກສາກ່ຽວການລະບົບການຕະຫຼາດ ຂອງສະຫະກອນ ໄດ້ມີການບໍລິຫານ ແລະ ການຈັດການຄືແນວໃດ?
4. ສຶກສາກ່ຽວລະບົບແບ່ງປັນຜົນປະໂຫຍດ ຈາກການດຳເນີນທຸລະກິດຂອງສະຫະກອນ.
5. ສຶກສາກ່ຽວກັບນະໂຍບາຍຂອງພາກລັດຕໍ່ກັບການຄຸ້ມຄອງ ແລະ ການສົ່ງເສີມການເຄື່ອນໄຫວຂອງສະຫະກອນ
6. ສຶກສາກ່ຽວກັບບັນຫາ ທີ່ເປັນອຸປະສັກ ແລະ ກົດໜ່ວງໃນການເຄື່ອນໄຫວວຽກງານຂອງສະຫະກອນ ເພື່ອຊອກຫາຊ່ອງທາງໃນການແກ້ໄຂ ແລະ ປັບປຸງໃຫ້ດີຂຶ້ນເທື່ອລະກ້າວ.

## II. ວິທີການ ແລະເຄື່ອງມືໃນການສຶກສາ

ກ່ອນການລົງສຶກສາຄັ້ງນີ້ ທີມງານສຶກສາໄດ້ສ້າງແບບຟອມເພື່ອເກັບກຳຂໍ້ມູນກ່ຽວກັບສະຫະກອນໃນລາວ ຊຶ່ງຄຳຖາມດັ່ງກ່າວແມ່ນໄດ້ເນັ້ນໃສ່ປະຫວັດ, ຄວາມເປັນມາຂອງສະຫະກອນ, ການບໍລິຫານຈັດການ, ການຈັດ ການດ້ານການເງິນ ລວມທັງຜົນປະໂຫຍດຂອງສະມາຊິກ. ລາຍລະອຽດສາມາດເບິ່ງໄດ້ໃນເອກະສານຊ້ອນທ້າຍທີ 1 (ແບບຟອມສຳພາດ).

ໄດ້ສຶກສາບັນດາເອກະສານຕ່າງໆ (ຂໍ້ມູນມືສອງ) ກ່ຽວກັບ ສະຫະກອນເປັນຕົ້ນແມ່ນ: ການປະເມີນສະຫະກອນກະສິກຳ 7 ແຫ່ງຢູ່ແຂວງຈຳປາສັກ ໃນປີ 2015, ບັນດາການລາຍງານຕ່າງໆກ່ຽວກັບການສົ່ງເສີມສະຫະກອນ ແລະນິຕິກຳຈຳນວນໜຶ່ງກ່ຽວກັບສະຫະກອນເຊັ່ນ: ດຳລັດວ່າດ້ວຍສະຫະກອນສະບັບເລກທີ່ 136/ນຍ, ຂໍ້ຕົກລົງຂອງລັດຖະມົນຕີກະຊວງກະສິກຳ ແລະປ່າໄມ້ ສະບັບເລກທີ 2983/ກປ, ວ່າດ້ວຍສະຫະກອນຜະລິດກະສິກຳ ແລະເອກະສານອື່ນໆ ອີກຈຳນວນໜຶ່ງ.

ຈາກນັ້ນໃນລະຫວ່າງວັນທີ 29 ສິງຫາ ຫາ ວັນທີ 3 ກັນຍາ 2016 ໄດ້ລົງເກັບກຳຂໍ້ມູນບັນດາຫະຫະກອນຢູ່ແຂວງຈຳປາສັກ, ແລະ ແຂວງຊຽງຂວາງ. ການລົງເກັບກຳຂໍ້ມູນແມ່ນໄດ້ໃຊ້ແບບຟອມສອບຖາມສະມາຊິກ, ຄະນະບໍລິຫານສະຫະກອນ ແລະເປັນກຸ່ມສົນທະນາກັບແຕ່ລະສະຫະກອນ. ໃນຂະນະດຽວກັນ, ກໍ່ໄດ້ສົນທະນາ ແລະແລກປ່ຽນກ່ຽວກັບການສະໜູນສະໜູນໃຫ້ແກ່ສະຫະກອນ ໂດຍການເຂົ້າພົບພາກສ່ວນຕ່າງໆທີ່ກ່ຽວຂ້ອງຢູ່ຂັ້ນແຂວງ ແລະເມືອງຈຳນວນໜຶ່ງຢູ່ໃນ ສອງ ແຂວງທີ່ລົງເກັບກຳຂໍ້ມູນການສຶກສາຄັ້ງນີ້. ນອກຈາກນີ້, ທີມງານຍັງໄດ້ຮັບຟັງການລາຍງານ ການສົ່ງເສີມ ແລະ ການດຳເນີນວຽກງານສະຫະກອນ ຈາກການນຳຂອງພະແນກການທີ່ກ່ຽວຂ້ອງຂອງແຂວງເປັນຕົ້ນແມ່ນ ພະແນກກະສິກຳ-ປ່າໄມ້ ແລະ ພະແນກອຸດສະຫະກຳ ແລະ ການຄ້າ ລວມທັງພາກສ່ວນອື່ນໆອີກ. ຍິ່ງໄປກວ່ານີ້, ການເກັບກຳຂໍ້ມູນຍັງໄດ້ຖ່າຍທຳວິດີໂອ ແລະສ້າງເປັນສາລະຄະດີເລື່ອງສັ້ນ.

## III. ຜົນໄດ້ຮັບ

### 3.1 ການກຳເນີດ ແລະ ຄວາມສຳຄັນຂອງສະຫະກອນ

ໃນລະຫວ່າງສັດຕະວັດທີ18-19 ເກີດມີການປະຕິວັດອຸດສະຫະກຳຂຶ້ນຢູ່ບັນດາໃນປະເທດເອີຣົບໄດ້ມີການນຳເອົາເຄື່ອງຈັກເຂົ້າມາໃຊ້ແທນແຮງງານຄົນຊຶ່ງເຮັດໃຫ້ເກີດການປ່ຽນແປງທາງເສດຖະກິດຄືເກີດມີການວ່າງງານແລະເສດຖະກິດຕົກຕ່ຳອອກເປັນວົງກວ້າງ ແລະ ມີການປ່ຽນແປງຢ່າງໃຫຍ່ຫຼວງຄັ້ງນີ້ເລີ່ມຕົ້ນທີ່ປະເທດອັງກິດ, ຊາວອັງກິດຕ້ອງປະສົບກັບບັນຫາຄວາມເດືອດຮ້ອນຢ່າງໜັກຈາກການທີ່ນາຍທຶນໃຊ້ເຄື່ອງຈັກແທນແຮງງານຄົນແລະການປົດຄົນງານອອກຈາກໂຮງງານສ່ວນຜູ້ປະກອບການຂະໜາດນ້ອຍຕ້ອງໄດ້ຍົກເລີກກິດຈະກຳໄປ. ສະພາບສັງຄົມທົ່ວໄປມີການແຂ່ງຂັນອອກເປັນ 2 ຝ່າຍຄື:ຝ່າຍນາຍທຶນແລະຝ່າຍກຳມະກອນ. ນາຍທຶນພະຍາຍາມສະແຫວງຫາກຳໄລຈາກການລົງທຶນຫຼາຍທີ່ສຸດໂດຍການເອົາລັດເອົາປຽບຝ່າຍກັບກຳມະກອນທຸກວິທີທາງ. ຈາກການປ່ຽນແປງທາງເສດຖະກິດຄັ້ງນີ້ບັນດາກຳມະກອນທີ່ຖືກບີບບັງຄັບທັງຫຼາຍຈຶ່ງຮ່ວມແຮງຊອກຫາວິທີທາງທີ່ຈະປົດປ່ອຍຄວາມທຸກຍາກຂອງພວກຕົນປະກອບກັບເວລານັ້ນໄດ້ມີນັກເສດຖະສາດທີ່ມີຄວາມຄິດຢາກຈະຊ່ວຍປະຄັບປະຄອງສະຖານະພາບຂອງສັງຄົມໃຫ້ດີຂຶ້ນໄດ້ສະເໜີແນວທາງປັບປຸງເສດຖະກິດໃຫ້ເກີດຄວາມເປັນທຳແກ່ສັງຄົມໂດຍການຮ່ວມມືລະຫວ່າງຜູ້ເດືອດຮ້ອນໃຫ້ຮູ້ຈັກການຊ່ວຍເຫຼືອຕົນເອງແລະຊ່ວຍເຫຼືອຊຶ່ງກັນແລະກັນແນວຄວາມຄິດດັ່ງກ່າວໄດ້ກໍ່ໃຫ້ເກີດມີສະຫະກອນ.

ໃນເວລາຕໍ່ມາບຸກຄົນຜູ້ທຳອິດທີ່ເຮັດໃຫ້ຄົນທົ່ວໄປຮູ້ຈັກຄຳວ່າ“ສະຫະກອນ”ຄືທ່ານໂຣເບີດໂອເວນຊາວອັງກິດຊຶ່ງຖືວ່າເປັນຜູ້ໃຫ້ກຳເນີດສະຫະກອນຂຶ້ນໃນໂລກ, ສະຫະກອນສະມາຄົມແຫ່ງທຳອິດທີ່ດຳເນີນການປະສົບຜົນສຳເລັດແລະເປັນຕົ້ນແບບໃນນີ້ຄືຮ້ານຄ້າສະຫະກອນແຫ່ງເມືອງຣອຊເດລປະເທດອັງກິດຕັ້ງຂຶ້ນເມື່ອປີພ.ສ. 2387 ໂດຍກຳມະກອນຊ່າງຕ່ຳຫູກຈຳນວນໜຶ່ງຊຶ່ງມີລາຍຮັບໜ້ອຍແລະປະສົບບັນຫາໃນການຊື້ເຄື່ອງອຸປະໂພກອັນຈຳເປັນແກ່ການຄອງຊີບເຊັ່ນ: ລາຄາແພງມີການປອມແປງແລະຖືກບຽດບຽນໃນການຊັ່ງແລະອື່ນໆ,ຈາກແນວຄິດຂອງໂຣເບີດໂອເວນໄດ້ເກີດມີແນວຄິດໃນການລວມຕົວກັນຈັດຕັ້ງສະຫະກອນເພື່ອຊ່ວຍເຫຼືອຕົນເອງແລະຊ່ວຍເຫຼືອຊຶ່ງກັນແລະກັນ ແຕ່ກໍ່ຍັງຕົກຢູ່ໃນອິດທິພົນຂອງອຸດສາຫະກຳແລະພໍ່ຄ້າຊຶ່ງມີອຳນາດຈາກການຜະລິດທາງການຄ້າໃນສະໃໝນັ້ນຈຶ່ງໄດ້ຮ່ວມຕົວກັນຈັດຕັ້ງເປັນສະມາຄົມປະກອບມີຜູ້ລິເລີ່ມ 28 ຄົນໂດຍລວມທຶນກັນຈັດຕັ້ງຮ້ານຄ້າເຄື່ອງອຸປະກອນໂພກບໍລິໂພກຂຶ້ນຈາກນັ້ນນຳເງິນທຶນທີ່ລວບລວມໄດ້ໄປຊື້ສິ່ງຂອງທີ່ຈຳເປັນແກ່ການຄອງຊີບໂດຍຈັດຊື້ໃນລາຄາຂາຍສົ່ງມາຂາຍໃຫ້ແກ່ສະມາຊິກແລະໃຫ້ສະມາຊິກເສຍສະຫຼະເວລາມາຊ່ວຍກິດຈະກຳຂອງຮ້ານຄ້າ. ຕໍ່ມາໃນປີ ພ.ສ. 2393 ທ່ານ ເອມັນ ຊູລຊາວເຢຍລະມັນຜູ້ພິພາກສາແຫ່ງເມືອງ ເດລິຕຊ ໄດ້ຄິດຈັດຕັ້ງສະຫະກອນປະເພດຫາທຶນຂຶ້ນໃນໝູ່ນາຍຊ່າງຝີມື ແລະພໍ່ຄ້າຂະໜາດນ້ອຍ ໂດຍລວມຕົວກັນອົງການເພື່ອຈັດຫາທຶນໃຫ້ສະມາຊິກກູ້ຢືມ ແລະ ໃນປີ ພ.ສ. 2405 ທ່ານຟຣິດຣິດ ວິນຣຽມ ໄຣຟໄຟເຊນ ຊາວເຢຍລະມັນໄດ້ຈັດຕັ້ງສະກະກອນຫາທຶນໃນໝູ່ບ້ານເຂດຊົນນະບົດຊຶ່ງເປັນຊາວກະສິກອນ ໂດຍຈັດເປັນອົງການເພື່ອຈັດຫາເພື່ອຈັດຫາທຶນໃຫ້ແກ່ສະມາຊິກກູ້ຢືມເຊັ່ນດຽວກັນ ໃນເວລາຕໍ່ມາການຮ່ວມກັນເປັນສະຫະກອນ ເພື່ອແກ້ບັນຫາຄວາມເດືອດຮ້ອນຂອງປະຊາຊົນ ກໍ່ໄດ້ແຜ່ຫຼາຍໄປຍັງປະເທດຕ່າງໆ ອັນເປັນປະໂຫຍດ ແລະເປັນຕົວຢ່າງໃນການຈັດຕັ້ງສະຫະກອນແກ່ຊາວຊົນນະບົດ ແລະ ຊາວເມືອງມາຈົນປະຈຸບັນ.

**ຄວາມສຳຄັນຂອງສະຫະກອນ,** ສະຫະກອນເປັນຮູບແບບຂອງທຸລະກິດທີ່ສະມາຊິກເປັນເຈົ້າຂອງກິດຈະການຊຶ່ງເປັນທີຮັບຮູ້ກັນໃນທົ່ວໂລກວ່າ: ອົງການຈັດຕັ້ງທີ່ຊ່ວຍເຫຼືອຕົນເອງ. ເປັນອົງການທີ່ປະກອບສ່ວນສຳຄັນໃຫ້ແກ່ການປັບປຸງຊີວິດການເປັນຢູ່ ແລະຊ່ວຍເຫຼືອຊຶ່ງກັນ ແລະກັນຂອງຊຸມຊົນຕ່າງໆ, ຍົກສະຖານະພາບທາງດ້ານເສດຖະກິດສັງຄົມຂອງຊາດ ແລະທັງເປັນການສ້າງຄວາມເຂັ້ມແຂງໃຫ້ແກ່ສະມາຊິກສະຫະກອນ ລວມທັງກະໂຕສະຫະກອນເອງ.

ນອກນີ້, ຢູ່ປະເທດທີ່ພັດທະນາແລ້ວກໍ່ຖືວ່າສະຫະກອນເປັນອົງປະກອບໜຶ່ງທີ່ສຳຄັນໃນການບັນລຸເປົ້າໝາຍສະຫະສັດຕະຫວັດ ໃນປີ 2015 ຍ້ອນວ່າມັນມີລັກສະນະສະເພາະໃນໂຕ ແລະຍັງກ່ຽວພັນກັບດ້ານເສດຖະກິດເປັນຕົ້ນຕໍ, ສ້າງໂອກາດໃຫ້ປະຊາຊົນທີ່ທຸກຍາກມີລາຍຮັບເພີ່ມຂຶ້ນ, ນຳໃຊ້ຫຼັກການປະຊາທິປະໄຕໜຶ່ງຄົນຕໍ່ໜຶ່ງສຽງ, ໃຫ້ສິດປະຊາ ຊົນໃນການຕັດສິນແກ້ໄຂບັນຫາຂອງພວກເຂົາ ແລະພວກເຂົາມີການຮ່ວມກັນຮັ່ງມີ ແລະຮ່ວມກັນຮັບຄວາມສ່ຽງທີ່ອາດເກີດຂຶ້ນໃນການດຳເນີນກິດຈະການ.

**ສະຫະກອນ ຂອງປະເທດໄທ** ສະຫະກອນໃນປະເທດໄທ ເກີດຂຶ້ນໄດ້ໂດຍຫຼາຍສາຍເຫດ ລິເລີ່ມແຕ່ສະໄໝກຸງລັດຕະນະໂກສິນ ຈາກສະພາບບັນຫາຄວາມທຸກຍາກຂອງຊາວນາໃນສະໄໝນັ້ນເຮັດໃຫ້ທາງລັດຖະບານຄິດຫາວິທີຊ່ວຍເຫຼືອດ້ວຍການຈັດຫາເງິນທຶນໃຫ້ກູ້ຢືມ ແລະ ຄິດອັດຕາດອກເບ້ຍຕໍ່າ ຄວາມຄິດນີ້ໄດ້ເລີ່ມຂຶ້ນໃນປາຍລັດຖະການທີ 5 ໂດຍມີການກຳນົດວິທີການທີ່ຈະຊ່ວຍເຫຼືອຊາວນາໃນດ້ານເງິນທຶນໄວ້ 2 ວິທີຄື:

- ວິທີທີ 1 ຈັດຕັ້ງທະນາຄານກະເສດ ເພື່ອໃຫ້ເງິນກູ້ຢືມແກ່ຊາວນາແຕ່ຂັດຂ້ອງໃນເລື້ອງເງິນທຶນ ແລະ ຫຼັກຊັບຄໍ້າປະກັນເງິນກູ້ ຄວາມຄິດນີ້ຈຶ່ງລະງັບໄປ;
- ວິທີທີ 2 ແມ່ນວິທີການສະຫະກອນປະເພດຫາທຶນ ວິທີນີ້ເກີດຂຶ້ນຈາກລັດຖະບານ ໂດຍກະຊວງພະລັງງານມະຫາສົມບັດ ໃນປະຈຸບັນຄືກະຊວງການຄັງ ໄດ້ເຊີນຫົວໜ້າທະນາຄານແຫ່ງປະເທດອິນເດຍເຂົ້າມາສຳຫຼວດຫາຊ່ອງທາງຊ່ວຍເຫຼືອຊາວນາ ໄດ້ສະເໜີວ່າຄວນຈັດຕັ້ງ “ ທະນາຄານ ໃຫ້ກູ້ຢືມແຫ່ງຊາດ” ດຳເນີນການໃຫ້ກູ້ຢືມແກ່ຊາວກະສິກອນ ໂດຍມີທີ່ດິນ ແລະ ຫຼັກຊັບອື່ນເປັນຫຼັກຊັບຄໍ້າປະກັນ ເພື່ອປ້ອງກັນບໍ່ໃຫ້ຊາວນາທີ່ກູ້ຢືມ ປະຖິ້ມເນື້ອທີ່ນາຫຼົບຫຼີກໜີ້ສິນ ສ່ວນການຄວບຄຸມເງິນກູ້ ແລະເກັບເງິນກູ້ ທ່ານໄດ້ແນະນຳໃຫ້ຈັດຕັ້ງເປັນສະມາຄົມທີ່ຮຽກວ່າ “ໂກແປລະຕີບ ໂຊໄຊຕີ” (Co-operatives Society) ໂດຍມີຫຼັກການຮ່ວມມືກັນ ເພື່ອຊ່ວຍເຫຼືອຊຶ່ງກັນ ແລະ ກັນ ຊຶ່ງຄຳນີ້ “ ສະມາຄົມສະຫະກອນ” ຊຶ່ງສາມາດເວົ້າໄດ້ວ່າ ປະເທດໄດ້ເລີ່ມສຶກສາວິທີການສະຫະກອນ ໃນປີ ພ.ສ. 2457 ແຕ່ກໍ່ຍັງບໍ່ທັນໄດ້ມີການດຳເນີນຫຍັງ ຕໍ່ມາກົມພານິດ ແລະ ສະຖິຕິພະຍາກອນ ຈຶ່ງໄດ້ທົດລອງຈັດຕັ້ງສະຫະກອນຫາເງິນທຶນຂຶ້ນ ໃນແຂວງ ພິດສະນຸໂລກ ເປັນແຫ່ງທຳອິດໃຊ້ຊື່ວ່າ “ສະຫະກອນວັດຈັນ ບໍ່ຈຳກັດສິນໃຊ້” ໂດຍຈົດທະບຽນເມື່ອວັນທີ 26 ກຸມພາ 2459. ໃນເບື້ອງຕົ້ນສະຫະກອນ ວັດຈັນບໍ່ຈຳກັດສິນໃຊ້ ມີສະມາຊິກຈຳນວນ 16 ຄົນທຶນດຳເນີນງານ 3,080 ບາດຊຶ່ງເປັນເງິນຈາກຄ່າທຳນຽມເຂົ້າເປັນສະມາຊິກເບື້ອງຕົ້ນ 80 ບາດ. ປີ ພ.ສ. 2478 ມີການລິເລີ່ມຈັດຕັ້ງສະຫະກອນເຊົ່າຊື້ທີ່ດິນທີ່ຈັງຫວັດປະທຸມທານີ ແລະ ອີກຫຼາຍໆສະຫະກອນໃນປີຕໍ່ມາ. ໃນ ປີ ພ.ສ. 2511 ສັນນິບາດ ສະຫະກອນແຫ່ງປະເທດໄທ ໄດ້ຖືກກຳເນີດຂຶ້ນເປັນສະຖາບັນສຳລັບໃຫ້ການສຶກສາແກ່ສະມາຊິກສະຫະກອນທົ່ວປະເທດ ມີໜ້າທີ່ຕິດຕໍ່ປະສານງານກັບສະຖາບັນສະຫະກອນຕ່າງໆປະເທດ ເພື່ອໃຫ້ເກີດຄວາມສຳພັນ ແລະ ຄວາມຊ່ວຍເຫຼືອຮ່ວມມືກັນລະຫວ່າງສະຫະກອນສາກົນໃນດ້ານອື່ນໆ ຊຶ່ງປະເທດໄທໄດ້ກຳນົດປະເພດສະຫະກອນໄວ້ 6 ປະເພດຕາມກົດໝາຍກະຊວງກະເສດ ແລະ ສະຫະກອນໃນສະໄໝນັ້ນ.

- **ປະເພດສະຫະກອນ**
  - o ພ.ສ. 2516 ປະກອບດ້ວຍ 6 ປະເພດ ສະຫະກອນຄື: 1) ສະຫະກອນການກະເສດ, 2) ສະຫະກອນນິຄົມ, 3) ສະຫະກອນການປະມົງ, 4) ສະຫະກອນອອມຊັບ, ແລະ 5)ສະຫະກອນຮ້ານຄ້າ ແລະ ສະຫະກອນບໍລິການ .
  - o ໃນປີ 2548 ໄດ້ປະກາດໃຫ້ມີ 7 ປະເພດສະຫະກອນຄື: 1) ສະຫະກອນການກະເສດ, 2) ສະຫະກອນນິຄົມ, 3) ສະຫະກອນການປະມົງ, 4) ສະຫະກອນອອມຊັບ, 5) ສະຫະກອນຮ້ານ

ຄ້າ, 6) ສະຫະກອນບໍລິການ ແລະ 7) ສະຫະກອນຄະດີດິດຢູ່ນຽນ.

- **ອຸດົມການ, ຫຼັກການ ແລະ ວິທີການສະຫະກອນ**
  - o ເປົ້າໝາຍອຸດົມການສະຫະກອນຂອງປະເທດໄທ ແມ່ນ" ກິນດີ ຢູ່ດີ ມີຄວາມເປັນທໍາ ແລະ ສັນຕິສຸກໃນສັງຄົມ".
  - o ຊຶ່ງໄດ້ປະກອບມີ 7 ຫຼັກການສະຫະກອນ( ການເປັນສະມາຊິກໂດຍສະມັກໃຈ ແລະ ເປີດກວ້າງ, ການຄວບຄຸມໂດຍສະມາຊິກຕາມຫຼັກການປະຊາທິປະໄຕ, ການມີສ່ວນຮ່ວມທາງເສດຖະກິດໂດຍສະມາຊິກ, ການປົກຄອງຕົນເອງ ແລະຄວາມເປັນອິດສະຫຼະ, ການປຶກສາຝຶກອົບຮົມ ແລະ ຂໍ້ມູນຂ່າວສານ, ການຮ່ວມລະຫວ່າງສະຫະກອນ, ການເອື້ອອາທອນຕໍ່ຊຸມຊົນ)[1] .
  - o ປັດໃຈພື້ນຖານສໍາຄັນຂອງວິທີການ ສະຫະກອນສູ່ຄວາມສໍາເລັດ (ຮ່ວມແຮງ ແລະ ຮ່ວມໃຈ).
- **ສະຫະພັນສະຫະກອນແຫ່ງປະເທດໄທ:** ລະບົບສະຫະກອນຢູ່ປະເທດໄທ ແບ່ງອອກເປັນ 3 ລະດັບ (ລະດັບຊາດ, ລະດັບພາກ ແລະ ທ້ອງຖິ່ນ), ຊຶ່ງປະກອບມີ: ກົມສົ່ງເສີມສະຫະກອນ, ກົມກວດສອບບັນຊີສະຫະກອນ, ສະຫະພັນສະຫະກອນແຫ່ງປະເທດໄທ, ສະຫະພັນສະຫະກອນຂັ້ນພາກ, ສະຫະພັນສະຫະກອນຂັ້ນແຂວງ ແລະ ມີ 7 ປະເພດສະຫະກອນ
- **ການສົ່ງເສີມສະຫະກອນຂອງລັດຖະບານ ໄທ:** ມີກົດໝາຍວ່າດ້ວຍສະຫະກອນ ອອກປີ 1999 ເປັນສະບັບປັບປຸງຄັ້ງທີ 2, ຫ້ອງການອອກທະບຽນສະຫະກອນ ກົມສົ່ງເສີມສະຫະກອນ, ກົມກວດສອບບັນຊີສະຫະກອນ, ກອງທຶນພັດທະນາສະຫະກອນ, ທະນາຄານສົ່ງເສີມກະສິກໍາ ແລະ ສະຫະກອນກະສິກໍາ, ນະໂຍບາຍດ້ານພາສີອາກອນ (ຍົກເວັ້ນອາກອນລາຍຮັບວິສາຫະກິດ) ແລະ ມີຄະນະກໍາມະການພັດທະນາສະຫະກອນແຫ່ງຊາດ.

**ສະຫະກອນ ສສ ຫວຽດນາມ**

ປະຫວັດຂອງສະຫະກອນຜະລິດກະສິກໍາ ປະເທດວຽດນາມ, ເລີ້ມຕົ້ນ ໃນລະຫວ່າງປີ 1958.

- **ລະບົບສະຫະກອນ** ຢູ່ ສສ ຫວຽດນາມ ປະກອບມີ( 3 ລະດັບ)ຄື: ສະຫະພັນສະຫະກອນແຫ່ງຊາດ ຂຶ້ນກັບອໍານາດການປົກຄອງຂອງສູນກາງ, ສະຫະພັນສະຫະກອນຂັ້ນແຂວງ ຂຶ້ນກັບອໍານາດການປົກຄອງຂັ້ນແຂວງ ແລະ ສະຫະກອນຕ່າງໆ ທີ່ຂຶ້ນກັບອໍານາດການປົກຄອງຂັ້ນບ້ານ.
- **ການສົ່ງເສີມສະຫະກອນຂອງລັດຖະບານ ສສ ຫວຽດນາມ:** ຢູ່ປະເທດ ສສ ຫວຽດນາມໄດ້ມີກົດໝາຍວ່າດ້ວຍສະຫະກອນ (ອອກປີ 2012 ເປັນສະບັບປັບປຸງທີ 3) ແລະ ມີນິຕິກໍາອື່ນໆ ເພື່ອສົ່ງເສີມສະຫະກອນ , ມີນະໂຍບາຍສະໜັບສະໜູນສະຫະກອນກະສິກໍາສະເພາະ, ມີລັດເປັນຜູ້ບໍລິຫານສະຫະກອນ, ມີລັດເປັນຜູ້ຮັບປະກັນໃຫ້ສະຫະກອນ, ມີລະບົບສະໜັບສະໜູນຂອງລັດ ແລະ ກ່ຽວກັບພາສີອາກອນ, ມີນະໂຍບາຍດ້ານສິນເຊື່ອ ແລະ ການເງິນ ແລະ ມີລະບົບຄຸ້ມຄອງຂອງລັດ.
- **ສະຫະພັນສະຫະກອນແຫ່ງ ປະເທດ ສສ ຫວຽດນາມ:** ປະກອບດ້ວຍອົງການຈັດຕັ້ງມະຫາຊົນ, ອົງການຂອງພັກ ແລະລັດ, ອົງການວິທະຍາສາດ,ສຶກສາ, ເສດຖະກິດ ແລະ ສັງຄົມ, ເປັນສະມາຊິກຂອງອົງການ ICA (International Cooperative Alliance), ມີໂຄງຮ່າງການຈັດຕັ້ງ 3 ລະດັບໂດຍມີສະຫະກອນຂັ້ນແຂວງແບບເອກະລາດ ໄດ້ມີການສ້າງຕັ້ງເປັນສະຫະພັນ/ສະມາຄົມພິເສດ ໂດຍນາຍົກລັດຖະມົນຕີ ຊຶ່ງໄດ້ສ້າງຂຶ້ນໃນປີ 1991 ໂດຍການຮ່ວມຕົວຂອງສະພາສະຫະກອນ ແລະ ວິສາຫະກິດເອກະຊົນຂັ້ນແຂວງ ກັບ ສະມາຄົມສະຫະກອນຫັດຖະກໍາຂະໜາດນ້ອຍ ແລະ ຄະນະກໍາມະການຈັດຊື້

[1] ເອກະສານ ອຸດົມການ, ຫຼັກການສະກອນ ວິທີການສະຫະກອນ ປະເທດໄທ

ແລະ ການຕະຫຼາດຂອງສະຫະກອນ. ເວົ້າກ່ຽວກັບຮູບແບບສະຫະກອນໃນປະເທດອ້ອມຂ້າງ,ຄວາມສໍາຄັນຂອງສະຫະກອນໃນການພັດທະນາເສດຖະກິດສັງຄົມ ແລະ ຊ່ວຍເຫຼືອຊາວກະສິກອນຜູ້ຜະລິດຂະໜາດນ້ອຍໃນປະເທດດັ່ງກ່າວ.

***ການພັດທະນາຂອງສະຫະກອນ ປະເທດ ສສ ຫວຽດນາມ:*** ໃນປີ 1993ເປັນສະຫະພັນ ທີ່ຂື້ນກັບລັດ (ງົບປະມານມາຈາກພາກລັດ, ລັດເປັນຜູ້ຕັດສິນໃຈ ແລະ ຕ່າງໜ້າສະຫະກອນໃນຮ່າງນະໂຍບາຍຂອງລັດເປັນຜູ້ຄວບຄຸມຂະແໜງສະຫະກອນ), ມາຮອດປີ 2014 ມາເຖິງປະຈຸບັນ 70%ຂອງງົບປະມານແມ່ນມາຈາກລັດຖະບານ ແລະ ແຜນການໃນຕໍ່ໜ້າຄາດວ່າຈະຫັນເປັນສະຫະພັນຂອງພາກເອກະຊົນ (ການຈັດຕັ້ງປະຕິບັດງົບປະມານມາຈາກສະຫະກອນ, ຄວບຄຸມດ້ວຍສະມາຊິກ ໂດຍອີງໃສ່ຫຼັກການພື້ນຖານຂອງສະຫະກອນ, ການຕັດສິນໃຈແບບປະຊາທິປະໄຕ ແລະ ກຸ່ມຕົນເອງຢ່າງເຕັມສ່ວນ

## 3.2 ຄວາມເປັນມາຂອງສະຫະກອນກະສິກໍາຢູ່ໃນ ສປປ ລາວ

ສະຫະກອນຢູ່ໃນປະເທດລາວແມ່ນໄດ້ມີການລິເລີ່ມມາດົນນານແລ້ວ ນັບແຕ່ກ່ອນປະເທດຊາດຈະໄດ້ຮັບການປົດປ່ອຍ ແລະ ພາຍຫຼັງສະຖາປະນາເປັນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ພັກ ແລະລັດຖະບານລາວຍາມໃດກໍ່ໄດ້ພະຍາຍາມພັດທະນາ ແລະສົ່ງເສີມວຽກງານສະຫະກອນໃຫ້ແທດເໝາະກັບແຜນພັດທະນາເສດຖະ ກິດ ແລະ ສັງຄົມໃນແຕ່ລະໄລຍະ. ການພັດທະນາສະຫະກອນຢູ່ໃນ ສປປ ລາວ ຜ່ານມາສາມາດແບ່ງອອກເປັນ 4 ໄລຍະດັ່ງຕໍ່ໄປນີ້:

ໄລຍະທີ 1. ກ່ອນປີ 1975, ຢູ່ໃນເຂດປົດປ່ອຍ 2 ແຂວງພາກເໜືອຄື: ແຂວງຊຽງຂວາງ ແລະແຂວງຫົວພັນ ໄດ້ມີການສ້າງຕັ້ງສະຫະກອນຂຶ້ນເປັນຕົ້ນແມ່ນການເຮັດນາລວມໝູ່ ແລະປູກພືດຕ່າງໆ. ຈຸດປະສົງໃນການສ້າງຕັ້ງແມ່ນເພື່ອປະກອບສ່ວນສະໜອງສະບຽງອາຫານໃຫ້ແກ່ກໍາລັງການຕໍ່ສູ້ປົດປ່ອຍປະເທດຊາດໃນໄລຍະນັ້ນ.

ໄລຍະທີ 2. ພາຍຫຼັງປີ 1975, ເມື່ອໄດ້ມີການປະກາດເອກະລາດ ແລະ ສະຖາປະນາເປັນ ສປປ ລາວ ໃນວັນທີ 2 ທັນວາ 1975 ນັບຈາກນັ້ນມາ ລັດຖະບານໄດ້ມີການເຕົ້າໂຮມຄົນເຂົ້າໃນການຈັດຕັ້ງກໍ່ສ້າງຮາກຖານຂັ້ນບ້ານໃຫ້ມີຄວາມເຂັ້ມ ແຂງ ແລະມີການສ້າງຕັ້ງສະຫະກອນຂຶ້ນໃນລະຫວ່າງປີ 1978-1983. ໃນໄລຍະດັ່ງກ່າວກໍ່ມີຄະນະຊີ້ນໍາສະຫະກອນຂັ້ນສູນກາງທີ່ຂຶ້ນກັບຫ້ອງສະພາລັດຖະມົນຕີ ໂດຍມີທ່ານຮອງນາຍົກລັດຖະມົນ ຕີເປັນຫົວໜ້າ.

ໄລຍະທີ 3. ໃນປີ 1983-1992 ເພື່ອໃຫ້ແທດເໝາະກັບສະພາບຄວາມເປັນຈິງໃນການຈັດຕັ້ງ ແລະຄຸ້ມຄອງບໍລິຫານສະຫະກອນ ຈຶ່ງໄດ້ມີການໂອນຍ້າຍສະຫະກອນມາຂຶ້ນກັບກະຊວງກະສິກໍາ, ປ່າໄມ້, ຊົນລະປະທານ ແລະ ສະຫະກອນກະເສດ ໃນເມື່ອກ່ອນ ໂດຍມີກົມສະຫະກອນປະກອບຢູ່ໃນໂຄງປະກອບການຈັດຕັ້ງຂອງກະຊວງ. ພາຍຫຼັງດໍາເນີນການປະຕິບັດມາໄດ້ໄລຍະໜຶ່ງມີຫຼາຍຫົວໜ່ວຍສະຫະກອນໄດ້ພົບກັບບັນຫາ ແລະຂໍ້ຫຍຸ້ງຍາກຫຼາຍຢ່າງບໍ່ສາມາດດໍາເນີນຕໍ່ໄດ້ ຈຶ່ງມີການ ຍຸບເລີກ ແບບບໍ່ເປັນທາງການໄປ.

ໄລຍະທີ 4. ພາຍຫຼັງທີ່ລັດຖະບານໄດ້ອອກດໍາລັດເລກທີ 136/ນຍ ວ່າດ້ວຍສະຫະກອນ ໃນເດືອນ ມີນາ 2010, ໃນໄລຍະນີ້ ຖືໄດ້ວ່າສະພາບການໃນພາກພື້ນ ແລະ ສາກົນມີການຜັນປ່ຽນຢ່າງຮຸນແຮງ ໂດຍສະເພາະແມ່ນການແຂ່ງຂັນທາງດ້ານເສດຖະກິດ. ເພື່ອຮັບມືກັບສະພາບການດັ່ງກ່າວ ພັກ-ລັດຖະບານຈຶ່ງໄດ້ວາງທິດທາງ, ມາດຕະການໃນການເຕົ້າໂຮມ ແລະພັດທະນາກໍາລັງການຜະລິດຄືນໃໝ່ ໃຫ້ມີກໍາລັງແຮງສັງລວມ ຕາມກົນໄກເສດຖະກິດຕະຫຼາດ ທີ່ມີຫຼາຍພາກສ່ວນເຂົ້າຮ່ວມ ດ້ວຍການສ້າງວິຫາຫະກິດລວມໝູ່ ຊຶ່ງທີ່ເຮົາຮັບຮູ້ ແລະ ເອີ້ນກັນວ່າ: ສະຫະກອນ.

ແນວໃດກໍ່ດີ, ເປົ້າໝາຍ ແລະ ຈຸດປະສົງຂອງການສ້າງຕັ້ງສະຫະກອນໃນແຕ່ລະໄລຍະກໍ່ມີຄວາມແຕກກັນເລັກນ້ອຍ ແຕ່ເປົ້າໝາຍຫຼັກໃນການສ້າງຕັ້ງສະຫະກອນແຕ່ລະໄລຍະກໍ່ແມ່ນເນັ້ນໃສ່ການປັບປຸງຊີວິດການເປັນຢູ່ຂອງຊາວ

ກະສິກອນໃຫ້ດີຂຶ້ນ, ສ້າງຄວາມສາມັກຄີພາຍໃນໂຕຂອງກຳລັງການຜະລິດ ລວມທັງຮັບປະກັນສະຖຽນລະພາບທາງດ້ານສັງຄົມ ແລະເສດຖະກິດຂອງຊາດ.

ຈາກການສຶກສາຄັ້ງນີ້ໄດ້ໃຫ້ຮູ້ວ່າ: ມາຮອດປະຈຸບັນນີ້ໃນທົ່ວປະເທດມີສະຫະກອນທັງໝົດ 35 ຫົວໜ່ວຍ. ໃນນັ້ນ, ມີສະຫະກອນຜະລິດກະສິກຳ ຈຳນວນ **14** ຫົວໜ່ວຍ, ສະຫະກອນຫັດຖະກຳ ມີ 1 ຫົວໜ່ວຍ, ສະຫະກອນສິນເຊື່ອ ແລະ ເງິນຝາກປະຫຍັດຈຳນວນ **20** ຫົວໜ່ວຍ

**ແຂວງຈຳປາສັກ:** ມີສະຫະກອນຜະລິດກະສິກຳ 7 ແຫ່ງ

(1). ສະຫະກອນກະເຟບໍລິເວນປາກຊ່ອງ ບ້ານທົ່ງກະຕ່າຍ (CEFBC)

(2). ສະຫະກອນຊາວສວນໃຈ ກາເຟ ບ້ານກະຕວດ ເມືອງປາກຊ່ອງ(JCFກຳC)

(3). ສະຫະກອນກາເຟປາກຊ່ອງຫຼັກ 40 ເມືອງປາກຊ່ອງ(PCC)

(4). ສະຫະກອນຜູ້ຜະລິດກາເຟເຂດພູພຽງບໍລະເວນ(CPC)

(5). ສະຫະກອນຜະລິດພືດຜັກບ້ານທົ່ງເຊັດເມືອງປາກຊ່ອງ(ACBPC)

(6). ສະຫະກອນເກັບຊື້ຜົນຜະລິດກະສິກຳບ້ານແກ້ງເກຍເມືອງບາຈຽງ(EABAPC)

(7). ສະຫະກອນພັດທະນາຊະນະສົມບູນບ້ານຄິລິເມືອງຊະນະສົມບູນ(SDC)

**ແຂວງວຽງຈັນ:** ມີ 3 ສະຫະກອນສິນເຊື່ອ ແລະ ຝາກເງິນປະຢັດ

(1). ສະຫະກອນສິນເຊື່ອແລະເງິນຝາກປະຢັດເມືອງຫີນເຫີບ;

(2). ສະຫະກອນສິນເຊື່ອແລະເງິນຝາກປະຢັດ ເມືອງວັງວຽງ;

(3). ສະຫະກອນສິນເຊື່ອແລະເງິນຝາກປະຢັດເມືອງກາສີ.

ສະຫະກອນສິນເຊື່ອ ແລະ ຝາກເງິນປະຢັດທັງ 3 ແຫ່ງນີ້ໄດ້ຮັບການສະໜັບສະໜູນທາງດ້ານແຫຼ່ງທຶນ ແລະວິຊາການຈາກໂຄງການອ່າງຮັບນ້ຳງື່ມ ແຕ່ມີການໄປຈົດທະບຽນນຳທະນາຄານກາງທັງໝົດ.

**ແຂວງຊຽງຂວາງ:** ມີ 8 ສະຫະກອນ

(1). ສະຫະກອນສິນເຊື່ອແລະເງິນຝາກປະຢັດເມືອງຜາໄຊ;

(2). ສະຫະກອນສິນເຊື່ອແລະເງິນຝາກປະຢັດເມືອງແປກ;

(3). ສະຫະກອນສິນເຊື່ອແລະເງິນຝາກປະຢັດເມືອງພູກູດ.

(4). ສະຫະກອນ ສິນເຊື່ອ ແລະ ເງິນຝາກປະຢັດ ເມືອງຄູນ.

(5). ສະຫະກອນພັດທະນາຊຸມຊົນຂະໜາດນ້ອຍຈຳກັດບ້ານຫອຍ (ທ່ານສົມພອນເປັນປະທານມີສະມາຊິກ 33 ຄົນໂທລະສັບ 020 22 547755)

(6). ສະຫະກອນພັດທະນາຊຸມຊົນຂະໜາດນ້ອຍບ້ານບຸນສີໄຊຊະນະພູແຄຈຳກັດ (ນາງມີມແລະທ່ານຄຳຈັນສົມພອນເປັນປະທານມີສະມາຊິກ 22 ຄົນ ໂທລະສັບ 020 22 741082.

(7). ສະຫະກອນພັດທະນາຊຸມຊົນພູບອນຈຳກັດ (ນາຕໍ) (ນາງບົວເພັດແລະນາງວິໄລວັນເປັນປະທານມີສະມາຊິກ 26

ຄົນໂທລະສັບ 020 56886061, 020 99521745)

(8). ສະຫະກອນພັດທະນາຊຸມຊົນບ້ານຖ້ຳຈຳກັດສະມາຊິກ 12 ຄົນ(ທ່ານພິລາໂທລະສັບ 020 23441934.

**ແຂວງຫຼວງນ້ຳທາ ມີ 1 ສະຫະກອນ**

(1) ສະຫະກອນຢາງພາລາ ບ້ານຫາດຍາວ ເມືອງ ແລະ ແຂວງຫຼວງນ້ຳທາ

***ໝາຍເຫດ: ລາຍລະອຽດມີຢູ່ໃນຕາຕະລາງສັງລວມຫົວໜ່ວຍວິສາຫະກິດ, ຂອງກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ ຫ້ອງການຖານຂໍ້ມູນວິສາຫະກິດແຫ່ງຊາດ (ຂໍ້ມູນແຕ່ 2008 ຫາ 2016) ຄັດຕິດຊ້ອນທ້າຍມາພ້ອມນີ້***

ສັງລວມແລ້ວສະຫະກອນທີ່ເກີດຂຶ້ນຢູ່ ສປປ ລາວ ແມ່ນມາຈາກບັນດາກຸ່ມຜະລິດຕ່າງໆທີ່ໄດ້ຮັບການສະໜັບສະໜູນຈາກບັນດາໂຄງການ ລວມທັງການສະໜັບສະໜູນຂອງລັດຖະບານ. ໃນນີ້ສະຫະກອນເກີດຂຶ້ນໃນ 3 ດ້ານຄື: 1) ເປັນກຸ່ມ ຈາກກຸ່ມເປັນສະມາຄົມ ແລ້ວກາຍເປັນສະຫະກອນ; 2) ຈາກກຸ່ມແລ້ວກໍ່ສ້າງຕັ້ງເປັນສະຫະກອນເລີຍ; 3) ສ້າງຕັ້ງເປັນສະຫະກອນເລີຍ ໂດຍບໍ່ຜ່ານກຸ່ມ (ກໍລະນີນີ້ແມ່ນມີນ້ອຍທີ່ສຸດ). ເຖິງແນວໃດກໍ່ດີ, ການສຶກສາຄັ້ງນີ້ຍັງຮູ້ວ່າ: ຍັງມີຫຼາຍສະຫະກອນ, ສະມາຊິກຂອງສະຫະກອນເອງແມ່ນຍັງບໍ່ມີຄວາມເຂົ້າໃຈແຈ້ງຕໍ່ແນວຄິດ ຫຼື ຫຼັກການໆເຮັດວຽກຂອງສະຫະກອນ. ນອກນັ້ນ, ຄະນະກຳມະການ ແລະການນຳຂອງສະຫະກອນຍັງບໍ່ສາມາດເຫັນຄວາມແຕກຕ່າງລະຫວ່າງກຸ່ມ, ສະມາຄົມ ແລະ ສະຫະກອນ. ສະຫະກອນຢູ່ໃນ ສປປ ລາວ ສ່ວນຫຼາຍແມ່ນລິເລີ່ມຈາກການສ້າງຕັ້ງກຸ່ມ - ສະມາຄົມ ແລະ ກ້າວຂຶ້ນເປັນສະຫະກອນ,ແຕ່ຊາວກະສິກອນ ບາງສ່ວນແມ່ນຍັງບໍ່ທັນມີຄວາມໜັກ ແໜ້ນກ່ຽວກັບແນວຄິດສະຫະກອນ ແລະ ຍັງມີຄວາມສັບສົນລະຫວ່າງກຸ່ມຜະລິດກະສິກຳ ກັບສະຫະກອນຜະລິດກະສິກຳ. ສະຫະກອນຜະລິດກະສິກຳເກີດຂຶ້ນຫຼາຍກວ່າໝູ່ແມ່ນຢູ່ແຂວງຈຳປາສັກ ນີ້ອາດເປັນຍ້ອນວ່າ ຈຳປາສັກເປັນເຂດທີ່ມີພູມມີອາກາດເໝາະສົມ, ດິນມີຄວາມອຸດົມບຸນດີ ເນື້ອທີ່ການຜະລິກກວ້າງໃຫຍ່, ປະຊາຊົນມີມູນເຊື້ອໃນການຜະລິດເປັນຕົ້ນແມ່ນການປູກຊາ, ກາເຟ ແລະ ພືດຜັກເປັນສິນຄ້າອີກຫຼາຍຊະນິດ. ຍິ່ງໄປກວ່ານີ້, ການນຳຂອງແຂວງຍັງໃຫ້ຄວາມສຳຄັນ ແລະໃຫ້ການຊຸກຍູ້ສົ່ງເສີມການສ້າງຕັ້ງກຸ່ມ ແລະ ສະຫະກອນ.

## 3.3 ປະເພດສະຫະກອນ ຢູ່ໃນ ສປປ ລາວ

ໂດຍປະຕິບັດຕາມດຳລັດ ເລກທີ 136/ນຍ ລົງວັນທີ ລົງວັນທີ 05 ມີນາ 2010 ໄດ້ກຳນົດປະເພດສະຫະກອນ
ອອກເປັນສອງປະເພດຕົ້ນຕໍຄື: 1) ສະຫະກອນດ້ານຜະລິດກະສິກຳ-ປ່າໄມ້, ອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ; 2) ສະຫະກອນດ້ານການບໍລິການເຊັ່ນ: ການຄ້າ, ການເງິນ, ການຂົນສົ່ງ, ການທ່ອງທ່ຽວ, ການກໍ່ສ້າງ, ການແພດ, ແລະການບໍລິການອື່ນໆທີ່ຄ້າຍຄືກັນ. ສະນັ້ນ, ສາມາດເວົ້າໄດ້ວ່າ ສະຫະກອນທີ່ມີຢູ່ໃນ ລາວ ແມ່ນມີແຕ່ສອງປະເພດເທົ່ານັ້ນ.

## 3.4 ໂຄງປະກອບການຈັດຕັ້ງສະຫະກອນ

ໂດຍສ່ວນໃຫຍ່ບັນດາສະຫະກອນ ທີ່ທີມງານໄດ້ລົງເກັບກຳຂໍ້ມູນຢູ່ ສອງ ແຂວງຄື: ແຂວງຊຽງຂວາງ ແລະ ແຂວງຈຳປາສັກ ໄດ້ພົບວ່າທຸກໆ ສະຫະກອນແມ່ນໄດ້ມີການສ້າງຕັ້ງຄະນະບໍລິຫານສະຫະກອນ ໂດຍອີງໃສ່ການຕົກລົງ

ເຫັນດີໃນກອງປະຊຸມສະຫະກອນ, ຊຶ່ງຄະນະບໍລິຫານງານສ່ວນຫຼາຍແມ່ນສະມາ ຊິກຂອງສະຫະກອນເອງ ແລະ ມີການເຄື່ອນໄຫວຕາມພາລະບົດບາດທີ່ລະບຸໄວ້ໃນກົດລະບຽບສະຫະກອນແຕ່ລະບ່ອນ. ມີແຕ່ສະຫະກອນຜູ້ຜະລິດກາເຟເຂດພູພຽງບໍລິເວນ (CPC)ສະຫະກອນດຽວເທົ່ານັ້ນທີ່ມີໂຄງປະກອບການ ຈັດຕັ້ງສະຫະກອນຄົບຕາມ ດຳລັດ 136/ນຍ ວ່າດ້ວຍສະຫະ ກອນແລະຂໍ້ຕົກລົງ 2983/ກປ ວ່າດ້ວຍສະຫະ ກອນຜະລິດກະສິກຳ ເປັນຕົ້ນແມ່ນກຳມະການບໍລິຫານ, ຜູ້ກວດກາ, ຜູ້ຈັດການ, ນາຍບັນຊີ, ພະນັກງານວິຊາການຈຳນວນໜຶ່ງຕາມຄວາມຈຳເປັນ.ແນວໃດກໍ່ດີ, ສະຫະກອນທຸກແຫ່ງແມ່ນໄດ້ມີການຈົດທະບຽນວິສາຫະກິດ ແລະ ເສຍອາກອນແຕ່ລະປີຕາມລະບຽບການວາງອອກ. ນອກນີ້ສະຫະກອນຫຼາຍກວ່າເຄິ່ງໜຶ່ງແມ່ນມີການດຳເນີນກອງປະຊຸມໃຫຍ່ປະຈຳປີເປັນປົກກະຕິ 1 ຄັ້ງຕໍ່ປີ ແລະ ກອງປະຊຸມຂັ້ນກຸ່ມ 2-3ຄັ້ງຕໍ່ປີ.

## 3.5 ລະບົບການຄຸ້ມຄອງບໍລິຫານ ແລະຈັດການສະຫະກອນ

### 3.5.1 ຮູບການຈັດຕັ້ງສະຫະກອນ ຢູ່ ສປປລາວ ໃນປະຈຸບັນ.

- ລະບົບໂຄງຮ່າງການຈັດຕັ້ງຂອງສະຫະກອນ

ບັນດາສະຫະກອນ ຜະລິດກະສິກຳທີ່ມີໃນປັດຈຸບັນ ຢູ່ໃນກົງຈັກການຈັດຕັ້ງແມ່ນປະກອບມີ ຄະນະບໍລິຫານງານ ແລະ ສະມາຊິກສະຫະກອນ, ເຊິ່ງຄະນະບໍລິຫານງານດັ່ງກ່າວແມ່ນໄດ້ມາຈາກການຄັດເລືອກ ແລະ ການຕົກລົງເຫັນດີຈາກສະມາຊິກສະຫະກອນ ດ້ວຍສອງວິທີຄື: 1) ແມ່ນຈາກຕົວແທນຂອງຊິກສະຫະກອນ ທີ່ສະມາຊິກເຫັນດີສະເໜີໃຫ້ຂຶ້ນເປັນຄະນະບໍລິຫານງານ, 2) ໄດ້ມາຈາກການຄັດເລືອກດ້ວຍວິທີການປ່ອນບັດລົງຄະແນນເອົາຜູ້ທີ່ນອນຢູ່ໃນເງື່ອນໄຂ ແລະ ໄດ້ຮັບຄະນະເປັນສຽງສ່ວນຫລາຍ ໃນຂະບວນການດັ່ງກ່າວຈະມີສະມາຊິກເຂົ້າຮ່ວມຫລາຍກວ່າ 70%ຂອງຈຳນວນສະມາຊິກທັງໝົດ.

ໂດຍທົ່ວໄປແລ້ວສະຫະກອນຜະລິດກະສິກຳເກືອບທັງໝົດໄດ້ປະຕິບັດຕາມຫຼັກການພື້ນຖານໃນການຈັດຕັ້ງ ແລະ ການເຄື່ອນໄຫວຂອງສະຫະກອນ ທີ່ລັດຖະບານວາງອອກ ໂດຍສະເພາະແມ່ນການຮັບສະມາຊິກຢ່າງເປີດກວ້າງບົນພື້ນຖານຄວາມສະໝັກໃຈ, ກຳມະການບໍລິຫານຂອງສະຫະກອນແມ່ນມາຈາກການເລືອກຕັ້ງສະມາຊິກ, ມີສະມາຊິກຫຼາຍກວ່າ ເຈັດຄົນຂຶ້ນໄປ. ແນວໃດກໍ່ດີ, ການສຶກສາຄັ້ງນີ້ຍັງພົບວ່າມີພຽງສອງສະຫະກອນຄື: 1) ສະຫະກອນຜູ້ຜະລິດກາເຟເຂດພູພຽງບໍລິເວນ (CPC); 2) ສະຫະກອນຊາວສວນໃຈກາເຟສະຫະກອນ ທີສະມາຊິກເປັນເຈົ້າການໃນການຄຸ້ມຄອງສະຫະກອນ ບົນຫຼັກການລວມສູນປະຊາທິປະໄຕ, ເປັນເຈົ້າຂອງ ຫຼື ເປັນທັງລູກຄ້າຂອງສະຫະກອນ. ສ່ວນສະຫະກອນອື່ນໆເຫັນວ່າຍັງແມ່ນຄະນະກຳມະການເປັນຜູ້ຈັດຕັ້ງປະຕິບັດເອງໝົດເຊັ່ນ: ການເຮັດວຽກຄຸ້ມຄອງບໍລິຫານງານຂອງສະຫະກອນ, ວຽກງານການຕະຫຼາດ, ວຽກບັນຊີການເງິນແລະອື່ນໆ. ລວມທັງການຕັດສິນໃຈໃນວຽກງານສະຫະກອນສ່ວນຫຼາຍແມ່ນຄະນະຮັບຜິດຊອບເປັນຜູ້ຕັດສິນໃຈເອງໝົດ. ຜ່ານການສຶກສາຂໍ້ມູນບົດບາດ ແລະ ການມີສ່ວນຮ່ວມຂອງສະມາຊິກໃນວຽກງານບໍລິຫານເຫັນວ່າຍັງມີໜ້ອຍ.

ກ່ຽວກັບການລາຍງານຜົນການຈັດຕັ້ງວຽກງານສະຫະກອນຕໍ່ສະມາຊິກ ປະມານ 1-2 ຄັ້ງຕໍ່ປີຄືກ່ອນ ແລະ ຫຼັງລະດູທຳການຜະລິດ, ວິທີການລາຍງານຄືໃນກອງປະຊຸມສະຫຼຸບ ແລະ ວາງແຜນເຄື່ອນໄຫວວຽກງານສະຫະກອນ ເຊິ່ງມີຕົວແທນຈາກກຸ່ມຜະລິດ(ຫົວໜ້າກຸ່ມສະຫະກອນແຕ່ລະບ້ານເຂົ້າຮ່ວມ) ຈາກນັ້ນຫົວໜ້າກຸ່ມຈຶ່ງນຳຜົນຈາກກອງປະຊຸມໄປເຜີຍແຜ່ໃຫ້ສະມາຊິກຕໍ່.

- ດ້ານບຸກຄະລະກອນ ແລະ ຕຳແໜ່ງງານ:

  ຢູ່ໃນບັນດາສະຫະກອນທັງໝົດແມ່ນມີພຽງສະຫະກອນຜູ້ຜະລິດກາເຟເຂດພູພຽງບໍລິເວນ (CPC) ທີ່ມີການເຄື່ອນໄຫວວຽກງານຂອງສະຫະກອນ ແລະ ກົງຈັກການຈັດຕັ້ງຂອງສະຫະກອນຄາຍຄືກັບບົດຮຽນ

ຂອງປະເທດເພື່ອນບ້ານ (ສະຫະກອນຢູ່ປະເທດໄທ) ເຊິ່ງກົງຈັກການຈັດຕັ້ງປະກອບມີ: ຄະນະບໍລິຫານງານສະຫະກອນຈຳນວນ 5 ທ່ານ: ປະທານ, ຮອງປະທານ, ຄະນະກຳມະການບໍລິຫານງານ (ບໍ່ມີເງິນເດືອນ) ຄະນະກວດກາສະຫະກອນ ປະກອບມີ 3 ທ່ານຄື: ປະທານກວດກາ ແລະ ຄະນະກວດກາ 2 ທ່ານ (ບໍ່ມີເງິນເດືອນ), ພະນັກງານສະຫະກອນ ປະກອບມີ: ຜູ້ຈັດການ 1 ທ່ານ ແລະ ມີພະນັກງານປະກອບໃສ່ໜ່ວຍງານວິຊາການ , ໜ່ວຍງານບໍລິຫານການເງິນ, ໜ່ວຍງານຄຸ້ມຄອງໂຮງງານ ແລະ ຫ້ອງທົດລອງ ແລະ ໜ່ວຍງານການຕະຫຼາດ (ມີເງິນເດືອນ)

ສ່ວນສະຫະກອນອື່ນໆ ແມ່ນປະກອບມີຄະນະບໍລິຫານງານ ແລະ ຄະນະກວດກາ 5-9 ທ່ານ ສ່ວນການຈ້າງຜູ້ຈັດການທີ່ມາຊ່ວຍໃນການດຳເນີນກິດຈະການຂອງສະຫະກອນແມ່ນບໍ່ມີ ແລະ ຍັງເຫັນວ່າບັນດາສະຫະກອນເຫຼົ່ານີ້ເກືອບທັງໝົດຍັງບໍ່ໄດ້ມີການແບ່ງງານຢ່າງລະອຽດໃຫ້ແກ່ຄະນະກຳມະການບໍລິຫານແຕ່ລະຄົນ ແລະບາງສະຫະກອນມີການແບ່ງງານພາຍໃນໃຫ້ແກ່ຄະນະກຳມະການບໍລິຫານແຕ່ການຈັດຕັ້ງປະຕິບັດແຕ່ພັດຍັງບໍ່ທັນມີປະສິດພາບເທົ່າທີ່ຄວນ.

### 3.5.2 ການຄຸ້ມຄອງດ້ານການເງິນ

ຈາກການລົງສຶກສາຕົວຈິງພົບວ່າ: ສະຫະກອນສ່ວນຫຼາຍ ນອກຈາກ ສະຫະກອນຜູ້ຜະລິດກະເຟເຂດພູພຽງບໍລະເວນ CPC ແມ່ນໄດ້ມີການຈັດຕັ້ງລະບົບການຄຸ້ມຄອງບໍລິຫານດ້ານການເງິນຄື: ມີນາຍບັນຊີ ແລະຄັງເງິນສົດ ລວມທັງມີປຶ້ມບັນຊີຜົນຜະລິດ, ບັນຊີລາຍຮັບລາຍຈ່າຍປະຈຳວັນ, ປຶ້ມບັນຊີເງິນຝາກທະນາຄານ ແລະເອກະສານສະໜັບສະໜູນອື່ນໆ ສ່ວນຫຼາຍຍັງແມ່ນຄະນະບໍລິຫານເປັນຜູ້ເຮັດເອງ ເຊິ່ງຜູ້ກ່ຽວຍັງຂາດປະສົບການກ່ຽວກັບການບໍລິຫານ ແລະການຈັດການດ້ານການບັນຊີ-ການເງິນ ເນື່ອງຈາກວ່າ ບໍ່ໄດ້ຮຽນມາ ແລະບໍ່ມີເງິນເດືອນ ຫຼື ສິ່ງຕອບແທນ ແຕ່ບັນດາຄະນະບໍລິຫານສະຫະກອນ ທັງຫຼາຍກໍ່ມີຄວາມພະຍາຍາມ ເພື່ອເຮັດໃຫ້ສະຫະກອນສາມາດດຳເນີນໄດ້ຢູ່ໃນໄລຍະລິເລີ່ມ.

ຮູບແບບການເຄື່ອນໄຫວທາງດ້ານການເງິນສ່ວນຫລາຍແມ່ນຮູບແບບເງິນສົດ ແລະ ການນຳໃຊ້ເງິນສ່ວນຫຼາຍແມ່ນຄະນະບໍລິຫານເປັນຈັດການ ແລະ ຕັດສິນໃຈ ແລະ ຍັງບໍ່ທັນມີການກວດກາຈາກພາກສ່ວນພາຍນອກ, ສ່ວນການລາຍງານການເຄື່ອນໄຫວ ແລະ ຜົນໄດ້ຮັບທາງດ້ານການເງິນໃຫ້ແກ່ສະມາຊິກສະຫະກອນແມ່ນ ອີງຕາມຄວາມເໝາະສົມໃນເວລາມີກອງປະຊຸມສະຫະກອນ.

## 3.6. ແຫຼ່ງທຶນຂອງສະຫະກອນ

ບັນດາສະຫະກອນຕ່າງໆ ທີ່ຢູ່ໃນ ສປປ ລາວ ບັນຫາທີ່ພົບເຫັນສ່ວນຫຼາຍແມ່ນຂາດແຫລ່ງທຶນໃນການດຳເນີນທຸລະກິດຂອງສະຫະກອນ (ເກັບຊື້ຜົນຜະລິດ, ສະໜອງປັດໃຈການຜະລິດ ແລະ ໃຫ້ສິນເຊື່ອແກ່ສະມາຊິກ), ດັ່ງນັ້ນ, ສະຫະກອນໄດ້ຊອກຫາຊ່ອງທາງໃຫ້ການຊອກຫາແຫລ່ງທຶນໃນຫລາຍຮູບແບບເຊັ່ນ: ການເກັບເງິນຈາກການລົງທະບຽນເຂົ້າເປັນສະມາຊິກສະຫະກອນ, ບາງສະຫະກອນມີການລະດົມເງິນຝາກປະຫຍັດ ຈາກສະມາຊິກສະຫະກອນ 50,000 ຫາ 500,000 ກີບ/ຄົນ, ໄດ້ຈາກສ່ວນຕ່າງຂອງການຂາຍຜົນຜະລິດ, ຈາກການຫັກເປີເຊັນ ແລະ ອື່ນໆ.... ແຕ່ເງິນດັ່ງກ່າວຖືວ່າຍັງເປັນຈຳນວນທີ່ໜ້ອຍບໍ່ພຽງພໍແຕ່ກັບການດຳເນີນທຸລະກິດຂອງສະຫະກອນ ເປັນຕົ້ນແມ່ນ: 1) ການເກັບຊື້ຜົນຜະລິດຈາກສະມາຊິກສະຫະກອນ, 2) ການໃຫ້ສິນເຊື່ອດ້ານການສະໜອງວັດຖຸ ແລະ ປັດໃຈການຜະລິດ , 3) ການໃຫ້ເງິນກູ້ຢືມ ເພື່ອໄປເຮັດການຜະລິດ.

ຈາກບັນຫາຕ່າງໆ ຂ້າງເທິງນີ້ ການດຳເນີນທຸລະກິດຂອງສະຫະກອນຈຶ່ງໄດ້ອາໃສການລົງທຶນຂອງພໍ່ຄ້າ ດ້ວຍຮູບແບບການເຮັດສັນຍາຊື້ຂາຍຜົນຜະລິດ ກັບພໍ່ຄ້າ ໂດຍໃຫ້ພໍ່ຄ້າເຂົ້າມາເປັນຜູ້ເກັບຊື້ຜົນຜະລິດ, ສະໜອງວັດຖຸອຸປະກອນ ແລະ ປັດໃຈການ ສ່ວນສະຫະກອນເອງຈະໄດ້ເງິນເປີເຊັນຈາກການຂາຍຜົນຜະລິດ ເງິນດັ່ງກ່າວສ່ວນໜຶ່ງຈະເປັນເງິນບໍລິຫານສະຫະກອນ ແລະ ຈະໄປເປັນເງິນຊ່ວຍເຫຼືອສັງຄົມເຊັ່ນ

ຕົວຢ່າງ: ສະຫະກອນຜູ້ຜະລິດກາເຟເຂດພູພຽງບໍລິເວນທີສາມາດເຂົ້າຫາທຶນຈາກທະນາຄານສາກົນສະເລ່ຍ 3-5 ລ້ານໂດລ້າສະຫະລັດຕໍ່ປີ (ດອກເບ້ຍ 6,5-6,8%/ປີ) ແລະທະນາຄານ ລາວຝະຣັ່ງ 500,000ດອນລ້າ/ປີ (ດອກເບ້ຍ 7%/ປີ). ນອກນີ້ຍັງໄດ້ເງິນຈາກອົງການການຄ້າເປັນທຳ 1,1 ດອນລ້າຕໍ່ ກິໂລ; ເງິນພັນທະສະມສຊິກ 100,000-200,000ກີບຕໍ່ຄົນ.

ສຳລັບສະຫະກອນຊາວສວນໃຈກາເຟແມ່ນໄດ້ຈາກເງິນໂບນັດ 2,000ກີບຕໍ່ກິໂລ (ຂາຍໃຫ້ຍີ່ປຸ່ນ) ເຂົ້າມາເປັນກອງ ທຶນສະຫະກອນ ແລະການປະກອບທຶນຂອງສະມາຊິກ 5,000ກີບຕໍ່ຄອບຄົວ, ມາຮອດປະຈຸບັນມາກອງທຶນທີ່ຝາກໄວ້ທະນາຄານ 50 ລ້ານກີບ., ຈາກການຫັກຄ່າເຕົ້າໂຮມຜົນຜະລິດ ແລະເປີເຊັນການຈຳໜ່າຍຜົນຜະລິດ.

ຈາກການເກັບກຳຂໍ້ມູນຄັ້ງນີ້ຍັງພົບວ່າ: ສະຫະກອນຫຼາຍແຫ່ງຍັງພົບບັນຫາຂາດທຶນ ບໍ່ມີເງິນໃນການດຳເນີນທຸລະກິດຂອງສະຫະກອນ ຊຶ່ງມີສາຍເຫດຕົ້ນຕໍດັ່ງລຸ່ມນີ້:

- ການປະກອບຫຸ້ນຂອງສະຫະກອນແມ່ນມີໜ້ອຍ ຫຼື ບໍ່ສາມາດລະດົມທຶນທີພຽງພໍກັບຄວາມຕ້ອງການ
- ບໍ່ສາມາດເຂົ້າຫາແຫຼ່ງທຶນດອກເບ້ຍທີ່ເໝາະສົມ ຫຼືມີດອກເບ້ຍຕ່ຳ
- ເງື່ອນໄຂໃນການເຂົ້າຫາແຫຼ່ງທຶນ (ທະນາຄານ) ແມ່ນຕ້ອງມີຫຼັກຊັບຄ້ຳປະກັນ ແຕ່ສະຫະກອນບໍ່ມີ
- ຄວາມເຊື່ອໝັ້ນຂອງພາກສ່ວນອື່ນໆ ຕໍ່ກັບສະຫະກອນໃນ ສປປ ລາວ ຍັງມີໜ້ອຍ.

## 3.7 ການຕະຫຼາດ

ການຕະຫຼາດແມ່ນເປັນປັດໃຈໜຶ່ງທີສຳຄັນທີ່ສຸດ ແລະ ເປັນຕົວຕັດສິນຄວາມຍືນຍົງຂອງສະຫະກອນ. ແຕ່ໃນຕົວຈິງແລ້ວບັນດາສະຫະກອນຕ່າງໆຖືວ່າຍັງບໍ່ສາມາດດຳເນີນການຕະຫຼາດໄດ້ຢ່າງເຕັມຮູບແບບ ແລະ ຍັງບໍ່ທັນສາມາດສ້າງມູນຄ່າເພີ່ມຂອງຜົນຜະລິດໄດ້ສູງເທົ່າທີ່ຄວນ ເຊິ່ງໃນປະຈຸບັນກໍ່ເຫັນວ່າບັນດາສະຫະກອນຕ່າງໆແມ່ນສາມາດເຮັດພຽງເປັນຜູ້ລວບລວມສິນຄ້າຈາກຊາວກະສິກອນ ແລະ ຈາກສະມາຊິກສະຫະກອນ ເພື່ອຕໍ່ລອງດ້ານລາຄາ ແລະ ຈຳໜ່າຍໃຫ້ພໍ່ຄ້າມີກາງ ຫຼື ບໍລິສັດຕາມສັນຍາ ໂດຍຂາຍເປັນວັດຖຸດິບ ຫຼື ຜະລິດຕະພັນເຄິ່ງສຳເລັດຮູບ ເຊັ່ນ: ຂາຍກາເຟໝາກແດງ ແລະ ໝາກສ້ອມ, ຜັກສົດ, ຢາງດິບ, ອື່ນໆ

ສ່ວນຕະຫຼາດຈຳໜ່າຍໝາກກະເຟຄຸນນະພາບກໍ່ມີບັນດາປະເທດຢູຣົບ, ຍີ່ປຸ່ນ, ອາເມລິກາ, ສິງກະໂປ, ເກົາຫຼີໃຕ້, ຈີນ ແລະປະເທດໄທ ຕະຫຼາດເຫຼົ່ານີ້ກໍ່ມີພຽງສອງສະຫະກອນທີ່ສາມາດເຂົ້າເຖິງໄດ້ ຄືສະຫະກອນ ຜູ້ຜະລິດກາເຟເຂດພູພຽງບໍລະເວນ ແລະ ສະຫະກອນຊາວສວນໃຈກາເຟ. ຈາກສາຍເຫດດັ່ງກ່າວຈຶ່ງສົ່ງຜົນສະທ້ອນເຮັດໃຫ້ສະຫະກອນ ບໍ່ສາມາດສ້າງກຳໄລໄດ້ດີເທົ່າທີ່ຄວນ ແລະ ເຮັດໃຫ້ທຸລະກິດຂອງສະຫະກອນ ມີການຂະຫຍາຍຕົວຊ້າ ຍ້ອນມີຫລາຍຂໍ້ຈຳກັດ ຄື:

ກ) ຄວາມຮູ້ຄວາມສາມາດໃນການວິເຄາະແລະ ຊອກຫາຕະຫຼາດຂອງຄະນະກຳມະການສະຫະກອນ;

ຂ) ສະຫະກອນສ່ວນຫຼາຍຍັງຂາດຂໍ້ມູນ ແລະບໍ່ສາມາດເຂົ້າຫາຂໍ້ມູນການຕະຫຼາດໄດ້ ໂດຍສະເພາະລາຄາປາຍທາງ;

ຄ) ຜົນຜະລິດທີ່ມີຄຸນນະພາບສູງຂອງສະຫະກອນແມ່ນມີຈຳນວນຈຳກັດ;

ງ) ການແລກປ່ຽນ ຫຼື ຮ່ວມມືກັນລະຫວ່າງສະຫະກອນຕໍ່ສະຫະກອນຍັງມີຂໍ້ຈຳກັດຫຼາຍ;

ຈ) ສະຫະກອນຈຳນວນຫຼາຍກວ່າເຄິ່ງໜຶ່ງແມ່ນຍັງອາໃສຄົນທາງນອກເປັນຜູ້ຊ່ວຍຊອກຫາຕະຫຼາດ ຫຼື ຈ້າງຄົນໂຄສະນາສິນຄ້າໃຫ້.

ຍິ່ງໄປກວ່ານີ້, ການຕະຫຼາດຂອງສະຫະກອນກ່ຽວກັບຜົນຜະລິດໝາກກາເຟ ເກືອບທັງໝົດແມ່ນຂຶ້ນກັບລາຄາຂອງຕະຫຼາດໂລກ ໝາຍວ່າການຕະຫຼາດສະຫະກອນກໍ່ມີຄວາມສ່ຽງສູງຫຼາຍ ຖ້າສະມາຊິກສະຫະກອນບໍ່ທັນມາປູກກາເຟຄຸນນະພາບໃຫ້ຫຼາຍຂຶ້ນເພື່ອຮັບປະກັນການປ່ຽນແປງດ້ານລາຄາຂອງກາເຟທົ່ວໄປ.

## 3.8 ຜົນປະໂຫຍດຕໍ່ສະມາຊິກ

ສະຫະກອນ ຢູ່ໃນ ສປປ ລາວ ສ່ວນຫຼາຍເປັນສະຫະກອນທີ່ຈັດຕັ້ງໃໝ່ ບວກກັບແຫລ່ງທຶນກໍ່ມີໜ້ອຍບໍ່ສາມາດດຳເນີນທຸລະກິດຂອງສະຫະກອນໄດ້ຕາມການວາງແຜນ. ດັ່ງນັ້ນຈຶ່ງສົ່ງຜົນໃຫ້ສະຫະກອນ ແລະ ສະມາຊິກບໍ່ໄດ້ຮັບຜົນປະໂຫຍດເທົ່າຄວນ (ຍັງມີໜ້ອຍ) ເຊັ່ນ:

1) ການສະໜອງປັດໃຈການຜະລິດໃນລາຄາຖືກກວ່າລາຄາທ້ອງຕະຫຼາດ ໃຫ້ແກ່ສະມາຊິກກໍ່ຍັງຢູ່ໃນຈຳນວນທີ່ຈຳກັດ ແລະ ກໍ່ບໍ່ທັນພຽງພໍກັບຄວາມຕ້ອງການ, ສະມາຊິກຂອງສະຫະກອນຫລາຍຄອບຄົວ ໄດ້ໄປກູ້ມຢືມເງິນນອກລະບົບ ເພື່ອມາຊື້ປັດໃຈການຜະລິດ (ຝຸ່ນເຄມີ, ແນວພັນ, ອື່ນໆ).
2) ການເຂົ້າເຖິງແຫລ່ງທຶນນະໂຍບາຍອັດຕາດອກເບ້ຍຕ່ຳຂອງລັດ ກໍ່ຖືກວ່າຍັງບໍ່ທັນມີ ສະນັ້ນ, ສະມາຊິກສະຫະກອນຈຶ່ງຈຳເປັນຕ້ອງໄດ້ອາໃສ່ນັກລົງທຶນ ຫຼື ພໍ່ຄ້າຄົນກາງເປັນຜູ້ສະໜອງທຶນໃຫ້

ຈາກສະພາບການ ທີ່ກ່າວມາຂ້າງເທິງນັ້ນ, ການສ້າງຕັ້ງສະຫະກອນກໍ່ຖືວ່າຍັງມີຈຸດດີຄືມັນເປັນວິທີທີ່ຊ່ວຍໃນການແກ້ໄຂບັນຫາຂອງສະມາຊິກໄດ້ໃນບາງດ້ານເປັນຕົ້ນແມ່ນ:

- **ດ້ານການຕະຫຼາດ**: ໄດ້ມີການແກ້ໄຂບັນຫາກ່ຽວກັບການເຂົ້າເຖິງການຕະຫຼາດຂອງສະມາຊິກຂອງສະຫະກອນເພາະວ່າກ່ອນເຂົ້າເປັນສະມາຊິກສະຫະກອນ ຊາວກະສິກອນຈະເປັນຜູ້ຊອກຫາຕະຫຼາດຈຳໜ່າຍຜົນຜະລິດເອງສ່ວນລາຄາການຈຳໜ່າຍກໍ່ແມ່ນພໍ່ຄ້າຄົນກາງເປັນຜູ້ກຳນົດ ແລະ ພາຍຫຼັງເປັນສະມາຊິກສະຫະກອນສະຫະກອນຈະເປັນຜູ້ພົວພັນ ແລະ ເຊື່ອມໂຍງຜູ້ຜະລິດກັບຜູ້ເກັບຊື້ໂດຍກົງ
- **ດ້ານລາຄາ:** ການຈຳໜ່າຍຜົນຜະລິດກໍ່ຖືວ່າຂ້ອນດີກວ່າຊາວກະສິກອນທົ່ວໄປ ຍ້ອນສະຫະກອນມີການທ້ອນໂຮມຜົນຜະລິດເຮັດໃຫ້ສາມາດຕໍ່ລອງລາຄາໄດ້ດີຂຶ້ນ ແລະ ອີກປະການໜຶ່ງຍ້ອນສາມາດຮັກສາຄຸນນະພາບຜົນຜະລິດໄດ້ດີຖືກຕາມມາດຖານຄວາມຕ້ອງການຂອງຜູ້ຊື້ເຮັດໃຫ້ສາມາດຂາຍໃນລາຄາທີ່ສູງກວ່າຕະຫຼາດທົ່ວໄປ ພ້ອມທັງໄດ້ເງິນລາງວັນໃນກໍລະນີທີ່ຜະລິດເປັນອິນຊີ ແລະ ໄດ້ຮັບໃບຢັ້ງຢືນການຄ້າເປັນທຳເຊັ່ນຕົວຢ່າງ:

1) ສະຫະກອນຜູ້ຜະລິດກະເຟເຂດພູພຽງບໍລະເວນ (CPC)ໄດ້ຂາຍກາເຟອອກຕ່າງປະເທດໃນລາຄາທີ່ສູງກວ່າລາຄາ ກາເຟຢູ່ພາຍໃນ ຄື:
   - ລາຄາຄ້ຳປະກັນ FTO ກາເຟໝາກຂຽວ 1,4 USD
   - ລາຄາການຄ້າເປັນ FT 0,44 USD
   - Organic Premiem 0,66 USD

   ລວມ 4,18 USD ຫຼື ປະມານ 33.400 ກີບຕໍ່ 1 ກິໂລກຣາມ

2) ສະຫະກອນຊາວສວນໃຈກາເຟ (JCFC)

- ມີຕະຫຼາດຈຳໜ່າຍຜົນຜະລິດກະເຟ ທັງພາຍໃນ ແລະຕ່າງປະເທດ;
- ສະມາຊິກສະຫະກອນຊາວສວນໃຈກາເຟ ສາມາດຂາຍກາເຟໝາກຊ້ອມ ຫລື່ນລາຄາຕ້ອງຕະຫຼາດ 10.000 ກີບ/ກິໂລກຣາມ;
- ໄດ້ຮັບເງິນໂບນັດ ຈາກການສົ່ງກາເຟອອກໄປຂາຍຕ່າງປະເທດ (ປະເທດຍີ່ປຸ່ນ) 2.000 ກີບຕໍ່ 1 ກິໂລ ໃນແຕ່ລະປີ ເຊິ່ງປະກອບເຂົ້າເປັນເງິນກອງທຶນຂອງສະຫະກອນ;
- ສະມາຊິກສະຫະກອນ ຈະໄດ້ຮັບເງິນລ່ວງໜ້າ 50 %ຂອງລາຄາຄ້ຳປະກັນ (ລາຄາກາເຟໝາກແດງ) **"ໂດຍແມ່ນບໍລິສັດດາວເຮືອງເປັນຜູ້ຈ່າຍ"** ແລະ ຈະໄດ້ເພີ້ມອີກ 200-300 ກີບຕໍ່ກິໂລກຣາມ ພາຍຫຼັງທີ່ສົ່ງກາເຟໃຫ້ບໍລິລັດ; ນອກນັ້ນ ສະມາຊິກສະຫະກອນຊາວສວນໃຈກາເຟ ຍັງໄດ້ຮັບສິນເຊື່ອເບ້ຍໝາກກາເຟ ຈະໄດ້ສົ່ງທຶນຄືນຫຼັງຈາກ 3 ປີ, ໄດ້ສິນເຊື່ອຝຸ່ນ ແລະ ເຂົ້າກິນໃນລາຄາຂາຍສົ່ງ.

- **ດ້ານຄວາມຮູ້:** ເຫັນວ່າສະມາຊິກມີຄວາມຮູ້ດ້ານການຜະລິດຫຼາຍຂຶ້ນຍ້ອນສະຫະກອນມີການໃຫ້ຂໍ້ມູນຂ່າວສານ ແລະ ມີການຝຶກອົບຮົມການຜະລິດໂດຍສະເພາະແມ່ນເຕັກນິກການຜະລິດກະສິກຳອິນຊີ, ການຍົກສະມັດຕະພາບ, ການປ້ອງກັນສັດຕູພືດ, ການປຸງແຕ່ງເບື້ອງຕົ້ນ ແລະ ອື່ນໆ ເຊັ່ນຕົວຢ່າງ: ສະຫະກອນ cpc ສະຫະກອນໃຈກາເຟ ໃນແຕ່ລະປີສະຫະກອນແມ່ນໄດ້ມີການຈັດຝຶກອົບຮົມເຕັກນິກກ່ຽວກັບການຜະລິດກາເຟຄຸນນະພາບໃຫ້ແກ່ສະມາຊິກຂອງສະຫະກອນ.

## IV. ການສະໜັບສະໜູນແກ່ການເຄື່ອນໄຫວຂອງສະຫະກອນໂດຍພາກສ່ວນຕ່າງໆ

ລັດຖະບານແຫ່ງ ສປປ ລາວ ໄດ້ອອກດຳລັດ ເລກທີ 136/ນຍ, ວ່າດ້ວຍສະຫະກອນ ແລະ ຂໍ້ຕົກລົງຂອງລັດຖະມົນຕີວ່າການກະຊວງກະສິກຳ ແລະ ປ່າໄມ້ ເລກທີ 2983/ກປ ວ່າດ້ວຍສະຫະກອນຜະລິດກະສິກຳ, ຈຸດປະສົງຂໍ້ຕົກລົງສະບັບນີ້ ແມ່ນກຳນົດຫຼັກການ, ລະບຽບການໃນການຈັດຕັ້ງ ແລະ ເຄື່ອນໄຫວຂອງສະຫະກອນດ້ານການຜະລິດກະສິກຳ ເພື່ອຊຸກຍູ້ສົ່ງເສີມການຜະລິດ ແລະ ການບໍລິການລວມໝູ່ດ້ານກະສິກຳໃຫ້ເຕີບໃຫຍ່ຂະຫຍາຍຕົວການເປັນຂະບວນການຜະລິດສິນຄ້າ ແລະ ສ້າງລາຍຮັບແນໃສ່ແກ້ໄຂຄວາມທຸກຍາກ ແລະ ເພື່ອຍົກລະດັບຊີວິດການເປັນຢູ່ຂອງຊາວກະສິກອນໃຫ້ດີຂຶ້ນປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ໃຫ້ມີຄວາມເຂັ້ມແຂງ. **"ສະຫະກອນດ້ານການຜະລິດກະສິກຳ"** ແມ່ນການຈັດຕັ້ງວິສາຫະກິດລວມໝູ່ຂອງຊາວກະສິກອນທີ່ສະໝັກໃຈສ້າງຂຶ້ນ ເພື່ອຮ່ວມມືຊ່ວຍເຫຼືອຊຶ່ງກັນ ແລະ ກັນໃນການຜະລິດກະສິກຳເປັນສິນຄ້າ ພ້ອມທັງໃຫ້ການບໍລິການດ້ານການສະໜອງປັດໃຈການຜະລິດ, ສິນເຊື່ອ ແລະ ການຈຳໜ່າຍຜົນຜະລິດ, ລວມທັງຮັບປະກັນທາງດ້ານສະຫວັດດີການສັງຄົມລະຫວ່າງສະມາຊິກ ແລະ ຄອບຄົວຂອງສະມາຊິກດ້ວຍກັນ.

ກະຊວງກະສິກຳ ແລະ ປ່າໄມ້ ເປັນຜູ້ຄຸ້ມຄອງສະຫະກອນຜະລິດກະສິກຳ ຢ່າງລວມສູນ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດໂດຍມອບໃຫ້ຂະແໜງສາຍຕັ້ງດັ່ງນີ້:

ຂັ້ນສູນກາງ ແມ່ນກົມສົ່ງເສີມກະສິກຳ ແລະ ສະຫະກອນ
ຂັ້ນແຂວງ ແມ່ນຂະແໜງສົ່ງເສີມກະສິກຳ ແລະ ສະຫະກອນ

ຂັ້ນເມືອງ ແມ່ນໜ່ວຍງານສົ່ງເສີມກະສິກຳ ແລະ ສະຫະກອນ

- **ນະໂຍບາຍສົ່ງເສີມຂອງລັດຕໍ່ສະຫະກອນ:**

1) **ດ້ານການຈັດຕັ້ງສະຫະກອນ:** ລັດໄດ້ມີນະໂຍບາຍສົ່ງເສີມທຸກຫົວໜ່ວຍ ທຸລະກິດ, ກຸ່ມຜະລິດ ແລະ ວິສາຫະກິດ ສ້າງຕັ້ງເປັນສະຫະກອນ ອີງໃສ່ເງື່ອນໃນການສ້າງຕັ້ງສະຫະກອນ ໃນດຳລັດ ເລກທີ່ 136/ນຍ ແລະ ຂໍ້ຕົກລົງ ຂອງລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້, ສະບັບເລກທີ 2983/ກປ, ວ່າດ້ວຍສະຫະກອນກະສິກຳ ທີ່ຈະໄດ້ຮັບການສ້າງຕັ້ງຕ້ອງມີເງື່ອນໄຂດັ່ງນີ້: 1) ເປັນຊາວກະສິກອນທີ່ຖືສັນຊາດລາວຊຶ່ງໄດ້ຜ່ານຂະບວນການຮ່ວມກັນເປັນກຸ່ມຜະລິດ ແລະການບໍລິການດ້ານກະສິກຳທີ່ຮັບການຢັ້ງຢືນຈາກອຳນາດການປົກຄອງທ້ອງຖິ່ນ ແລະ ມີຄວາມສະໝັກໃຈເຂົ້າເປັນສະຫະກອນ; 2) ມີຄະນະກະກຳມະການທີ່ເປັນຕົວແທນຂອງຜູ້ສະໝັກໃຈຢ່າງໜ້ອຍ 3 ຄົນ; 3) ມີກົດລະບຽບ ແລະ ແຜນດຳເນີນກິດຈະກຳ, ມີຫ້ອງການ, ມີທຶນ ແລະ ຊັບສິນເພື່ອຮັບປະກັນໃຫ້ແກ່ການດຳເນີນສະຫະກອນທີ່ກຳນົດໄວ້. ຖ້າວ່າມີເງື່ອນໄຂຄົບຖ້ວນຕາມກ່າວມາຂ້າງເທິງນີ້ ຈຶ່ງປະກອບເອກະສານຂໍສ້າງຕັ້ງສະຫະກອນນຳຫ້ອງການກະສິກຳ-ປ່າໄມ້ເມືອງບ່ອນທີ່ມີຫ້ອງການສະຫະກອນຕັ້ງຢູ່,

ພາຍຫຼັງໄດ້ຮັບເອກະສານຂໍສ້າງຕັ້ງສະຫະກອນແລ້ວ ຫ້ອງການກະສິກຳ-ປ່າໄມ້ປະຈຳເມືອງ ຕ້ອງໄດ້ດຳເນີນການຄົ້ນຄວ້າພິຈະນາກ່ຽວກັບການອອກອະນຸຍາດສ້າງຕັ້ງສະຫະກອນຜະລິດກະສິກຳຢ່າງຊ້າບໍ່ໃຫ້ກາຍ 10 ວັນລັດຖະການນັບແຕ່ມື້ໄດ້ຮັບເອກະສານເປັນຕົ້ນໄປ. ກໍລະນີທີ່ບໍ່ສາມາດອອກໃບອະນຸຍາດໃຫ້ໄດ້ ຕ້ອງແຈ້ງຕອບເປັນລາຍລັກອັກສອນ ພ້ອມທັງອະທິບາຍເຫດຜົນໃຫ້ແກ່ຜູ້ສະເໜີຂໍສ້າງຕັ້ງສະຫະກອນຮັບຊາບ. ໃບອະນຸຍາດຂໍສ້າງຕັ້ງສະຫະກອນຜະລິດກະສິກຳ ກຳນົດການນຳໃຊ້ໄດ້ 3 ປີ. ເມື່ອໄດ້ຮັບອະນຸຍາດສ້າງຕັ້ງສະຫະກອນຜະລິດກະສິກຳແລ້ວສະຫະກອນຕ້ອງປະກອບເອກະສານ ເພື່ອຍື່ນຄຳຮ້ອງຂໍຈົດທະບຽນນຳຫ້ອງການອຸດສະຫະກຳ ແລະ ການຄ້າເມືອງ ແລະ ຈະມີຖານະເປັນນິຕິບຸກຄົນ ນັບແຕ່ວັນທີ່ໄດ້ຮັບຂຶ້ນທະບຽນ.

ເມື່ອສ້າງຕັ້ງເປັນສະຫະກອນກະສິກຳແລ້ວ ລັດຈະມີນະໂຍບາຍສົ່ງເສີມການພັດທະນາສະຫະກອນແບບຍືນຍົງ ພ້ອມທັງສ້າງເງື່ອນໄຂ ແລະ ໂອກາດທີ່ດີໃຫ່ແກ່ການດຳເນີນທຸລະກິດການຜະລິດໃນດ້ານຕ່າງໆເຊັ່ນ:

- ສ້າງເງື່ອນໄຂໃຫ້ມີຄວາມສາມາດແຂ່ງຂັນ ແລະ ເຂົ້າເຖິງຕະຫຼາດ,
- ສ້າງເງື່ອນໄຂອຳນວຍຄວາມສະດວກເພື່ອຊ່ວຍເຫຼືອດ້ານທຶນຮອນ, ດ້ານສິນເຊື່ອ, ດ້ານຈັດສັນນຳໃຊ້ທີ່ດິນ,ດ້ານພາສີອາກອນ, ດ້ານການສົ່ງເສີມການນຳໃຊ້ວິທະຍາດ-ເຕັກໂນໂລຊີ, ກໍ່ສ້າງໂຄງລ່າງທີ່ຈຳເປັນ ແລະ ພັດທະນາຊັບພະຍາກອນມະນຸດ,
- ສົ່ງເສີມ ແລະ ສ້າງເງື່ອນໄຂໃຫ້ສະຫະກອນປະກອບສ່ວນເຂົ້າໃນການຈັດຕັ້ງປະຕິບັດແຜນເສດຖະກິດ-ສັງຄົມຂອງປະເທດໂດຍສະເພາະແມ່ນນະໂຍບາຍຫຼຸດຜ່ອນຄວາມທຸກຍາກຂອງປະຊາຊົນ, ຍ້ອງຍໍ ແລະ ໃຫ້ລາງວັນເພື່ອກະຕຸກຊຸກຍູ້ສະຫະກອນ ຫຼື ສະມາຊິກທີ່ດີເດັ່ນ, ຮັບປະກັນຄວາມສະເໝີພາບຕໍ່ກົດໝາຍຂອງສະຫະກອນໃນການເຄື່ອນໄຫວທຸລະກິດຮ່ວມກັບປະເພດທຸລະກິດອື່ນ,
- ສົ່ງເສີມສະຫະກອນໃຫ້ມີສາຍພົວພັນ ຮ່ວມມືກັບຕ່າງໆປະເທດ ແລະ ອົງການຈັດຕັ້ງສາກົນດ້ວຍການແລກປ່ຽນບົດຮຽນທາງດ້ານວິຊາການ ແລະ ເຕັກໂນໂລຊີ, ນອກນັ້ນຍັງໄດ້ຍົກລະດັບຄວາມຮູ້ຄວາມ

ສາມາດໃນການບໍລິການ ການຈັດການຂອງສະຫະກອນ, ອະນຸຍາດໃຫ້ບັນດາສະຫະກອນຕ່າງໆສ້າງຕັ້ງຂຶ້ນ ແລະ ເຄື່ອນໄຫວກິດຈະກຳຂອງຕົນພາຍໃຕ້ການຄຸ້ມຄອງດູແລ ແລະ ຊ່ວຍຂອງຂະແໜງການທີ່ກ່ຽວຂ້ອງ.

2) ດ້ານການສ້າງຄວາມຮູ້ຄວາມສາມາດ: ລັດມີການຝຶກອົບຮົມ ດ້ານເຕັກນິກວິຊາການຕ່າງໆ ກ່ຽວກັບການຜະລິດ(ການຍົກສະມັດຕະພາບຜົນຜະລິດ, ການຜະລິດກະສິກຳສະອາດ, ການປຸງແຕ່ງ ແລະ ອື່ນໆ), ຝຶກອົບຮົມດ້ານການຄຸ້ມຄອງບໍລິຫານ ແລະ ການຈັດການສະຫະກອນ ແລະ ຝຶກອົບຮົມກ່ຽວກັບພື້ນຖານບັນຊີ-ການເງິນຂອງສະຫະກອນ ເຊິ່ງແມ່ນກົມສົ່ງເສີມກະສິກຳ ແລະ ສະຫະກອນ, ພະແນກກະສິກຳ-ປ່າໄມ້ ແລະ ຫ້ອງການກະສິກຳ-ປ່າໄມ້ເມືອງ
3) ດ້ານການຕະຫຼາດ: ໃນປະຈຸບັນການຊອກຫາຕະຫຼາດຈຳໜ່າຍຜະລິດຕະພັນຂອງສະມາຊິກສະຫະກອນ ຢູ່ພາຍໃນ ແລະ ພາຍນອກຍັງແມ່ນສະຫະກອນເປັນຜູ້ຈັດການເອງ ສ່ວນພາກລັດແມ່ນໃຫ້ຄວາມສະດວກດ້ານການຕິດຕໍ່ພົວພັນ ແລະ ໃຫ້ຂໍ້ມູນຂ່າວສານດ້ານການຕ່າງໆ ເປັນຕົ້ນແມ່ນການຈັດງານສະແດງສິນຄ້າຢູ່ພາຍໃນ ແລະ ຕ່າງປະເທດ ຈັດງານພົບປະແລກປ່ຽນບົດຮຽນໃນດ້ານຕ່າງໆ.
4) ດ້ານທຶນຮອນ: ທຶນໃນການດຳເນີນທຸລະກິດຂອງສະຫະກອນ ແລະ ທຸລະກິດອື່ນໆ ຂອງສະຫະກອນແມ່ນເປັນບັນຫາທີ່ພາກລັດໄດ້ມີຄວາມພະຍາຍາມຄົ້ນຄວ້າ ແລະຊອກຫາທາງອອກທີ່ເໝາະສົມຊ່ວຍສະຫະກອນຢູ່, ຈະມີພຽງທຶນໃນການສ້າງຄວາມເຂັ້ມແຂງທີ່ດ້ານເຕັກນິກວິຊາການ ຊຶ່ງໄດ້ຮັບການສະໜັບສະໜູນຈາກພາກລັດ ແລະ ອົງການຈັດສາກົນອື່ນໆ. ເພື່ອແກ້ໄຂບັນຫາດັ່ງກ່າວພາກລັດໄດ້ມີນະໂຍບາຍສົ່ງເສີມ ແລະ ຄຸ້ມຄອງການລົງທຶນຕ່າງປະເທດ ເພື່ອເປັນການກະຕຸກຊຸກຍູ້ໃຫ້ນັກລົງທຶນຕ່າງປະເທດເຂົ້າມາລົງທຶນຢູ່ໃນ ສປປ ລາວ, ການປົກປ້ອງການລົງທຶນຕ່າງປະເທດ ສປປ ລາວຈະຮັບຮູ້ກຳມະສິດທາງດ້ານທຶນຮອນ, ຊັບສິນບັດ ແລະ ຜົນປະໂຫຍດຕ່າງໆຂອງຜູ້ລົງທຶນຕ່າງປະເທດ ແລະ ຄ້ຳປະກັນທາງດ້ານກົດໝາຍ ຊຶ່ງຜູ້ລົງທຶນຕ່າງປະເທດ ລວມທັງວິສາຫະກິດການລົງທຶນຕ່າງປະເທດທີ່ສ້າງຂຶ້ນຕາມກົດໝາຍການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຕ່າງປະເທດ. ຂອບເຂດ ແລະ ກິດຈະກຳການສົ່ງເສີມການລົງທຶນຕ່າງປະເທດ ຄື: ບຸກຄົນ ຫຼື ນິຕິບຸກຄົນຕ່າງປະເທດ ສາມາດລົງທຶນດຳເນີນທຸລະກິດການຜະລິດປຸງແຕ່ງ ແລະ ການບໍລິການໄດ້ໃນທຸຂະແໜງການເສດຖະກິດໃນ ສປປລາວ ຕາມທີ່ໄດ້ມີການລາຍບຸໃນກົດໝາຍສົ່ງເສີມການລົງທຶນ ແລະ ການຄຸ້ມຄອງການລົງທຶນຕ່າງປະເທດ ຍົກເວັ້ນບັນດາກິດຈະກຳ ແລະ ສະຖານທີ່ໃດທີ່ກົດໝາຍລາວບໍ່ອະນຸຍາດໃຫ້. ຜູ້ລົງທຶນຕ່າງປະເທດສາມາດລົງທຶນຢູ່ໃນ ສປປລາວ ດ້ວຍສອງຮູບແບບຄື: 1) ວິສາຫະກິດລົງທຶນຕ່າງປະເທດຝ່າຍດຽວ 100 %; ວິສາຫະກິດປະສົມລະຫວ່າງຜູ້ລົງທຶນຕ່າງປະເທດ ກັບຜູ້ລົງທຶນພາຍໃນ. ຜູ້ລົງທຶນຕ່າງປະເທດສາມາດສ້າງຕັ້ງຮູບແບບວິສາຫະກິດການລົງທຶນຕ່າງປະເທດ ໂດຍສອດຄ່ອງກັບກົດໝາຍວ່າດ້ວຍວິສາຫະກິດຄື: ບໍລິສັດຮຸ້ນສ່ວນ, ບໍລິສັດຈຳກັດ ແລະ ບໍລິສັດມະຫາຊົນ.

5) ດ້ານການນຳເຂົ້າສົ່ງອອກ ແລະ ດ້ານການແຂງຂັນກັບຕ່າງປະເທດ: ໃນຜ່ານມາວິສາຫະກິດການລົງທຶນຕ່າງປະເທດແມ່ນຈະໄດ້ຮັບນະໂຍບາຍໃຫ້ເສຍພາສີ ແລະ ອາກອນນຳເຂົ້າ 1 % (ໜຶ່ງສ່ວນຮ້ອຍ)ສຳລັບວັດຖຸອຸປະກອນ, ເຄື່ອງຈັກ, ພາຫານະການຜະລິດ ແລະ ການຂົນສົ່ງທີ່ຈຳເປັນເພື່ອຮັບໃຊ້ການຜະລິດທຸລະກິດ ແລະ ການກໍ່ສ້າງໃນໂຄງການຂອງຕົນເທົ່ານັ້ນ.
    - ການນຳເຂົ້າວັດຖຸດິບ ແລະ ຜະລິດຕະພັນເຄື່ອງສຳເລັດຮູບ ເພື່ອນຳໃຊ້ໃນການຜະລິດ, ການປຸງແຕ່ງຫຼືປະກອບຜະລິດຕະພັນຂາອອກນັ້ນ ຈະຮັບການຍົກເວັ້ນພາສີ ອາກອນຂາເຂົ້າ, ເມື່ອມີການສົ່ງອອກ

ຜະລິດຕະພັນນັ້ນ ກໍ່ຈະຮັບການຍົກເວັ້ນພາສີອາກອນຂາອອກເຊັ່ນດຽວກັນ.

- ສໍາລັບວັດຖຸດິບ ແລະ ຜະລິດຕະພັນເຄື່ອງສໍາລັບຮູບ ທີ່ນໍາເຂົ້າມາ ເພື່ອທໍາການປຸງແຕ່ງ ຫຼື ປະກອບເປັນຜະລິດຕະພັນ ເພື່ອປ່ຽນແທນສິນຄ້ານໍາເຂົ້າ ກໍ່ຈະໄດ້ຮັບການຜ່ອນຜັນພາສີອາກອນຂາເຂົ້າຕາມລະບຽບກົດໝາຍວ່າດ້ວຍພາສີອາກອນຂອງລັດຖະບ້ານ.

6) ດ້ານໂຄງລ່າງພື້ນ: ທາງພາກລັດມີການພິຈະລານາ ໃນການຈັດຫາງົບປະມານກໍ່ສ້າງໂຄງລ່າງພື້ນຖານການຜະລິດກະສິກໍາ ເປັນຕົ້ນການກໍ່ສ້າງເສັ້ນທາງ, ລະບົບຊົນລະປະທານ ເພື່ອອໍານວຍຄວາມສະດວກໃນການຜະລິດກະສິກໍາເປັນສິນຄ້າ, ແຕ່ບັນຫາທີ່ພົບ ແລະ ຍັງຄ້າງຄ່າໃນປະຈຸບັນກໍ່ຄືຄ່າກະແສໄຟຟ້າທີ່ນໍາເຂົ້າໃນການການຜະລິດທຸລະກິດຕ່າງໆ ແມ່ນຍັງມີລາຄາແພງ ເປັນສາຍເຫດເຮັດໃຫ້ຊາວກະສິກອນ ຫຼື ສະຫະກອນຫຼາຍແຫ່ງຕ້ອງໄດ້ຮັບພາລະໜີ້ສິນກ່ຽວກັບກະແສໄຟຟ້າ.

ສະເພາະແຂວງຈໍາປາສັກ ທາງອໍານາດການປົກຄອງແຂວງກໍ່ໄດ້ຖືເອົາວຽກສະຫະກອນເປັນວຽກສໍາຄັນ ສະນັ້ນ, ເຈົ້າແຂວງໆຈໍາປາສັກ ຈຶ່ງໄດ້ອອກຂໍ້ລົງຂອງເຈົ້າແຂວງ ສະບັບເລກທີ 774/ຈຂ.ຈສ, ລົງວັນທີ 05/8/2016 ວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບຊີ້ນໍາ ແລະ ຄຸ້ມຄອງການພັດທະນາ ສະຫະກອນກະສິກໍາຂັ້ນແຂວງ ເຊິ່ງມີຂະແໜງການທີ່ກ່ຽວຂ້ອງຂອງແຂວງເຂົ້າຮ່ວມ ໂດຍແມ່ນ ທ່ານ ຮອງເຈົ້າແຂວງ ເປັນຫົວໜ້າ; ຮອງພະແນກກະສິກໍາ ແລະ ປ່າໄມ້ເປັນຮອງ; ຫົວໜ້າພະແນກພາຍໃນແຂວງ, ຮອງພະແນກວິທະຍາສາດ ແລະເທັກໂນໂລຊີ, ຫົວໜ້າພະແນກສ່ວຍສາອາກອນ, ຮອງຫົວໜ້າພະແນກອຸດສະຫະກໍາ ແລະ ການຄ້າ, ຮອງພະແນກແຜນການ ແລະ ການລົງທຶນ, ປະທານສະພາການຄ້າ ແລະ ອຸດສະຫະກໍາ, ຮອງຫົວໜ້າຫ້ອງວ່າການປົກຄອງແຂວງໆຈໍາປາສັກ, ຮອງຫົວໜ້າທະນາຄານ ສປປ ລາວສາຂາພາກໃຕ້ ແລະ ຮອງເຈົ້າເມືອງ 10 ເມືອງຜູ້ຊີ້ນໍາເສດຖະກິດ ເປັນຄະນະ. ຈຸດປະສົງການແຕ່ງຕັ້ງຄະນະຮັບຜິດຊອບຊີ້ນໍາ ແລະ ຄຸ້ມຄອງການພັດທະນາ ສະຫະກອນກະສິກໍາລະດັບຂັ້ນແຂວງ ຂຶ້ນກໍ່ເພື່ອຊີ້ນໍາ ຄຸ້ມຄອງພັດທະນາວຽກງານສະຫະກອນ ໃຫ້ປະສົບຜົນສໍາເລັດ. ນອກນັ້ນ, ກະຊວງກະສິກໍາ ແລະ ປ່າໄມ້ ໂດຍສະເພາະແມ່ນກົມສົ່ງເສີມກະສິກໍາ ແລະ ສະຫະກອນ ພາຍໃຕ້ການຮ່ວມມືກັບໂຄງການ DGRV (ລັດຖະບານເຢຍລະມັນ) ກໍ່ໄດ້ໃຫ້ການສະໜັບສະໜູນຂະບວນການຕ່າງໆ ເພື່ອພັດທະນາສະຫະກອນພາຍໃນ ລາວ ໃຫ້ມີຄວາມເຂັ້ມແຂງ. ບໍ່ພຽງແຕ່ເທົ່ານີ້ຍັງມີຫຼາຍໆໂຄງການກໍ່ໄດ້ໃຫ້ການສະໜັບສະໜູນບັນດາກຸ່ມຜູ້ຜະລິດທີເຂັ້ມແຂງໃຫ້ພັດທະນາມາເປັນສະຫະກອນເປັນຕົ້ນແມ່ນ
ໂຄງການຜະລິດກະສິກໍາເປັນສິນຄ້າ, ໂຄງການ SADU.ເຖິງແນວໃດກໍ່ດີ, ການສະໜັບສະໜູນສະຫະກອນກໍ່ຍັງບໍ່ມີລະບົບອັນຈະແຈ້ງລະຫວ່າງພາກສ່ວນທີ່ຮັບຜິດຊອບໃນການອອກໃບທະບຽນສະຫະກອນ (ພະແນກອຸດສາຫະກໍາ ແລະ ການຄ້າ) ແລະ ພາກສ່ວນທີ່ສະໜັບສະໜູນການສ້າງຄວາມສາມາດໃຫ້ແກ່ສະຫະກອນເປັນຕົ້ນແມ່ນຂະແໜງກະສິກໍາ ແລະ ປ່າໄມ້, ບັນດາໂຄງການຕ່າງໆ ຈາກບັນຫານີ້ຈຶ່ງເກີດມີບັນຫາຫຼາຍດ້ານທີ່ກົດໜ່ວງຕໍ່ການພັດທະນາສະຫະກອນໂດຍສະເພາະການເຂົ້າຫາແຫຼ່ງທຶນ ແລະການຕະຫຼາດສະຫະກອນ.

## 4.1. ໂອກາດ ແລະ ສິ່ງທ້າທາຍໃຫ້ແກ່ສະຫະກອນຢູ່ໃນລາວ

### 4.1.1 ໂອກາດໃນການພັດທະນາສະຫະກອນ

ພັກ ແລະ ລັດຖະບານຍາມໃດກໍ່ໄດ້ເອົາໃຈໃສ່ໃຫ້ຄວາມສໍາຄັນໃນການພັດທະນາປະເທດຊາດ ແລະ ຖືເອົາ

ການຜະລິດ ແລະເຮັດທຸລະກິດກະສິກຳເປັນສະໜາມຣົບອັນດັບໜຶ່ງ ແນ່ໃສ່ຮັບປະກັນການເຕົ້າໂຮມ ແລະ ຂະຫຍາຍກຳລັງການຜະລິດໃຫ້ນັບມື້ນັບເຕີບໃຫຍ່. ສະນັ້ນ, ລັດຖະບານ ຈຶ່ງເນັ້ນໃສ່ການສ້າງ ແລະພັດທະນາວິສາຫະກິດລວມໝູ່ ກໍ່ຄື ***ສະຫະກອນ*** ຊຶ່ງສະແດງອອກຢ່າງຈະແຈ້ງໃນຄວາມພະຍາຍາມຂອງລັດຖະບານ ໂດຍການອອກລະບຽບການ ແລະ ນິຕິກຳ ເອື້ອອຳນວຍໃນແຕ່ລະໄລຍະ ເພື່ອເປັນບ່ອນອີງໃນການຈັດຕັ້ງ ແລະ ພັດທະນາສະຫະກອນ.

ນອກນີ້, ຍັງມີອົງການ ຈັດຕັ້ງສາກົນ ແລະໂຄງການພັດທະນາຈຳນວນໜຶ່ງກໍ່ມີເຈດຈຳນົງໃນການສະໜັບສະໜູນ ແລະ ພັດທະນາກຸ່ມຜະລິດໃຫ້ກາຍເປັນຜູ້ປະກອບການດ້ານກະສິກຳ ຫຼື ກ້າວຂຶ້ນເປັນສະຫະກອນຕາມທ່າແຮງ ແລະຄວາມຕ້ອງການຂອງຊາວກະ ສິກອນເອງ.

ສຳລັບຊາວກະສິກອນ ກໍ່ໄດ້ຫັນປ່ຽນຈາກການຜະລິດພໍກຸ້ມກິນ ເຮັດພໍໃຜພໍລາວ, ຫັນມາຜະລິດເພື່ອໃຫ້ກາຍເປັນສິນຄ້າ ໂດຍມີການຈັດຕັ້ງເປັນກຸ່ມ ແລະ ກ້າວຂຶ້ນເປັນສະຫະກອນ ຊຶ່ງໄດ້ມີການຜະລິດໃຫ້ໄດ້ຕາມຄວາມຕ້ອງການຂອງຜູ້ບໍລິໂພດ ທາງດ້ານປະລິມານ ແລະ ຄຸນນະພາບຄື: ຜະລິດເປັນກະສິກຳອິນຊີ, ມີການລວບລວມສິນຄ້າ, ມີການຄັດເກດ, ມີການປຸງແຕ່ງ ແລະ ອື່ນໆ ຊຶ່ງມັນໄດ້ສ້າງຄວາມສົນໃຈໃຫ້ແກ່ຜູ້ບໍລິໂພກທາງພາຍໃນ ແລະ ຕ່າງປະເທດ ເຊັ່ນຕົວຢ່າງ ກຸ່ມລ້ຽງງົບເປັນສິນຄ້າ ບ້ານເກີນເໜືອ ເມືອງທຸລະຄົມ ແຂວງວຽງຈັນ, ສະຫະກອນຜູ້ຜະລິດກາເຟເຂດພູພຽງບໍລະເວນ cpc, ສະຫະກອນໃຈກາເຟ ເຊິ່ງມັນໄດ້ເຮັດໃຫ້ເສດຖະກິດຂອງສະມາຊິກດີຂຶ້ນເທື່ອລະກ້າວ. ນອກຈາກນັ້ນມັນຍັງສາມາດສ້າງເງື່ອນໄຂເອື້ອອຳນວຍໃຫ້ ມີຄວາມສາມາດເຊື່ອມໂຍງໃນພາກພື້ນ ແລະ ສາກົນ ເພາະປະເທດ ສປປລາວ ມີຊາຍແດນຕິດຈອດກັບປະເທດທີ່ມີຄວາມຕ້ອງການສູງດ້ານສະບຽງອາຫານ ແລະ ວັດຖຸດິບ ເຊັ່ນ: ສປ ຈີນ, ໄທ ແລະ ຫວຽດນາມ ແລະ ການເຊື່ອມໂຍງເຂົ້າຢູ່ໃນປະຊາຄົມອາຊຽນ AEC

ແນວທາງຂອງພັກລັດ ແມ່ນມີແນວຄວາມຄິດຊຸກຍູ້ສົ່ງເສີມຊາວກະສິກອນ ແລະ ສະຫະກອນຜະລິດຜົດກະສິກຳອິນຊີ ເພື່ອສົ່ງອອກ ເນື່ອງວ່າພື້ນທີ່ຜະລິດກະສິກຳ ຢູ່ໃນ ສປປ ລາວ ສ່ວນຫຼາຍຍັງເປັນພື້ນທີ່ທີ່ອຸດົມສົມບູນ ແລະ ການນຳໃຊ້ສານເຄມີກໍ່ຍັງຢູ່ໃນອັດຕາທີ່ຕໍ່າ.

ເບື້ອງອົງການຈັດຕັ້ງສາກົນຕ່າງໆ ກໍ່ໄດ້ໃຫ້ທຶນຊ່ວຍເຫຼືອໃຫ້ການຟື້ນຟູ ແລະ ອະນຸຮັກສິ່ງແວດລ້ອມ, ທຶນຊ່ວຍເຫຼືອໃນການຜະລິດໃຫ້ກາຍເປັນສິນຄ້າສະອາດ ເຊັ່ນ ທະຄານໂລກ, ທະນາຄານພັດທະນາອາຊີ ແລະ ກອງທຶນອື່ນໆ.

## 4.2 ບັນຫາ ແລະ ສິ່ງທ້າທາຍໃນການສ້າງຕັ້ງສະຫະກອນ

ເຖິງວ່າສະຫະກອນຢູ່ໃນ ລາວ ຈະມີປະຫວັດ ຫຼື ກຳເນີດມາໄດ້ຫຼາຍປີກ ກໍ່ຕາມ ແຕ່ເຫັນວ່າຍັງມີຫຼາຍບັນຫາ ແລະ ສິ່ງທ້າທາຍຕ່າງໆ ດັ່ງລຸ່ມນີ້:

- ຄວາມພ້ອມຂອງຊາວກະສິກອນ: ຊາວກະສິກອນສ່ວນຫຼາຍຍັງບໍ່ທັນເຂົ້າໃຈ ກ່ຽວກັບແນວຄວາມຄິດ ແລະ ຮູບແບບຂອງສະຫະກອນໄດ້ຢ່າງເລິກເຊິ່ງ ຫຼື ອາດເວົ້າໄດ້ວ່າບໍ່ເຂົ້າໃຈເລີຍ ຫລາຍຄົນແມ່ນຍັງມີຄວາມຢ້ານວ່າມັນຈະເປັນຄືກັບຮູບແບບ ການປະຕິບັດສະຫະກອນ ຢູ່ໃນຊວງພາຍຫຼັງປະເທດຊາດໄດ້ຮັບການປົດປ່ອຍໃໝ່, ຈຶ່ງບໍ່ກ້າເຂົ້າມາເປັນສະມາຊິກຂອງສະຫະກອນ, ສະມາຊິກຂອງສະຫະກອນໃນປະຈຸບັນຖືວ່າຍັງມີຈຶ່ງນວນໜ້ອຍ ຖ້າທຽບໃສ່ສະຫະກອນຂອງປະເທດໃກ້ຄຽງ ເຊັ່ນ ໄທ, ສສຫວຽດນາມ ແລະ ຜູ້ທີ່ເປັນສະມາຊິກສະຫະກອນສ່ວນຫຼາຍກໍ່ແມ່ນຜ່ານການປູກລະດົມ ແລະ ເປັນຍາດຕິພີນ້ອງກັນ, ຜ່ານການລົງສົນທະນາກັບສະມາຊິກຂອງສະຫະກອນ ຫລາຍຄົນການສະໝັກເຂົ້າມາເປັນສະມາຊິກ

ສະຫະກອນ ມີຄວາມຄາດຫວັງວ່າຈະໄດ້ຮັບການຊ່ວຍເຫຼືອ ແລະ ນະໂຍບາຍດ້ານຕ່າງໆເປັນຕົ້ນແມ່ນແຫລ່ງທຶນດອກເບ້ຍຕໍ່າ, ໄດ້ຂາຍຜົນຜະລິດໃນລາຄາທີ່ສູງ, ໄດ້ຮັບຜົນປະໂຫຍດຕ່າງໆຈາກສະຫະກອນເປັນຕົ້ນແມ່ນສາມາດຊື້ປັດໃຈການຜະລິດ, ກົນຈັກກະສິກໍາ ແລະ ອື່ນໆໃນລາຄາທີ່ຖືກກວ່າລາຄາທ້ອງຕະຫຼາດ ແຕ່ກົງກັນຂ້າມເມື່ອສ້າງຕັ້ງສະຫະກອນແລ້ວ ມີສະຫະກອນຫຼາຍແຫ່ງແມ່ນບໍ່ສາມາດດໍາເນີນທຸລະກິດຂອງສະຫະກອນໄດ້ຕາມແຜນການ ສະຫະກອນ ແລະ ສະມາຊິກຂອງສະຫະກອນຍັງບໍ່ໄດ້ຮັບຜົນປະໂຫຍດຫຍັງ ຈຶ່ງສົ່ງຜົນໃຫ້ສະມາຊິກຂອງສະຫະກອນຈໍານວນໜຶ່ງຖອນຕົວ. ສະຫຼຸບແລ້ວຜ່ານການປະເມີນຕີລາຄາວ່າມາຮອດປະຈຸບັນ ຄວາມພ້ອມຂອງຊາວກະສິກອນໃນການສ້າງຕັ້ງສະຫະກອນຢ່າງເຕັມຮູບແບບ ແມ່ນຍັງບໍ່ສູງ.

- ຄວາມພ້ອມຂອງພາກລັດໃນການຊຸກຍູ້ສົ່ງເສີມຊາວກະສິກອນ ກ່ຽວກັບວຽກງານຂອງສະຫະກອນ: ຫ້ອງການ ຫຼື ໜ່ວຍງານທີ່ຮັບຜິດຊອບວຽກງານສະຫະກອນຢູ່ໃນແຂວງ ແລະ ເມືອງກໍ່ແມ່ນການຈັດຕັ້ງໃໝ່ງົບປະມານໃນການເຄື່ອນໄຫວວຽກງານ, ວັດຖຸອຸປະກອນ ແລະ ພາຫະນະຮັບໃຊ້ກໍ່ບໍ່ພຽງພໍ, ຄຽງຄູ່ກັນນັ້ນດ້ານພະນັກງານສະເພາະທີ່ມີຄວາມເຂົ້າໃຈແນວຄວາມຄິດ ແລະ ຫຼັກການຂອງສະຫະກອນ ພ້ອມທັງມີຄວາມຮູ້ຄວາມສາມາດໃນການເຜີຍແຜ່ແນວຄວາມຄິດ, ຫຼັກການຂອງສະຫະກອນ ເພື່ອເຮັດໃຫ້ຊາວກະສິກອນມີຄວາມເຂົ້າໃຈໄດ້ນັ້ນຖືວ່າຍັງມີຈໍານວນຈໍາກັດ (ພະນັກງານວິຊາການຍັງບໍ່ພຽງພໍ), ນອກຈາກນັ້ນຄວາມເປັນເອກະພາບໃນການຈັດຕັ້ງປະຕິບັດນະໂຍບາຍພາກສ່ວນກະສິກໍາ ກັບຂະແໜງການອື່ນໆຈາກເທິງລົງລຸ່ມເຫັນວ່າຍັງບໍ່ມີຄວາມເປັນເອຫະພາບກັນ.
- ດ້ານການແຂ່ງຂັນກັບພາຍນອກ: ບັນດາສະຫະກອນຜູ້ຜະລິດກະສິກໍາ ທີ່ມີໃນປະຈຸບັນນີ້ຖືວ່າການແຂ່ງຂັນກັບພາຍນອກດ້ານການຜະລິດແມ່ນຍັງຕໍ່າ ເຊັ່ນຕົວຢ່າງສະຫະກອນຜູ້ຜະລິດກະເຟ ກໍ່ຍັງບໍ່ສາມາດແຂງຂັນກັບບໍລິສັດ ດາວເຮື່ອງ, ບໍລິສັດສີນຸກ ..., ສະຫະກອນຜະລິດປູກເຂົ້າເປັນສິນຄ້າ ສະຫະກອນສຸວັນນະຄີ, ເມືອງຊະນະສົມບູນ, ແຂວງຈໍາປາສັກ ກໍ່ຍັງບໍ່ສາມາດແຂ່ງຂັນກັບບັນດາໂຮງສີເຂົ້າຕ່າງໆໄດ້ ແລະ ສະຫະກອນອື່ນໆກໍ່ເຊັ່ນດຽວກັນ.
- ດ້ານການສະໜອງແຫລ່ງທຶນຕ່າງໆ: ມາຮອດປະຈຸບັນຢູ່ໃນ ສປປ ລາວ ແມ່ນຍັງບໍ່ທັນມີແຫລ່ງໃດຂອງລັດ ທີ່ສະໜອງທຶນດອກຍເບ້ຍຕໍ່າ ໃນການສົ່ງເສີມການດໍາເນີນເຄື່ອນໄຫວທຸລະກິດຂອງສະຫະກອນ, ນອກຈາກທະນາຄານຂອງລັດທີ່ກໍານົດນົດອັດຕາດອກເບ້ຍໃນການຜະລິດກະສິກໍາ 10-12%/ປີ ໄລຍະເວລາການກູ້ຢືມ 1-3ປີ ແລະ ການກູ້ຢືມຕ້ອງມີຫຼັກຊັບຄໍ້າປະກັນ. ສະນັ້ນ, ຈຶ່ງເປັນບັນຫາເຮັດໃຫ້ສະຫະກອນຫຼາຍແຫ່ງບໍ່ສາມາດເຂົ້າເຖິງແຫລ່ງໄດ້ ບວກກັບການລະດົມທຶນຈາກສະມາຊິກກໍ່ມີຈໍານວນໜ້ອຍ ຈຶ່ງເຮັດໃຫ້ສະຫະກອນ ບໍ່ມີທຶນໃນການດໍາເນີນທຸລະກິດ.
- ການຮັບປະກັນດ້ານຕະຫຼາດ ແລະ ລາຄາ ຂອງພາກລັດຖືວ່າຍັງບໍ່ທັນມີ ເຊິ່ງປະຈຸບັນພາກລັດ ພຽງແຕ່ສ້າງສິ່ງເອື້ອອໍານວຍໃຫ້ກຸ່ມຜະລິດ ຫຼື ສະຫະກອນໄດ້ຮັບຂໍ້ມູນຂ່າວສານດ້ານຕະຫຼາດ ແລະ ກະຕຸກຊຸກຍູ້ໃຫ້ນັກລົງທຶນຕ່າງປະເທດເຂົ້າມາລົງທຶນຢູ່ໃນລາວ ເພື່ອເຮັດສັນຍາຊື້-ຂາຍກັບຊາວກະສິກອນ ແລະ ສົ່ງຜົນຜະລິດອອກໄປຂາຍຕ່າງປະເທດ. ອີງປະການໜຶ່ງທີ່ຊາວກະສິກອນ ຫຼື ສະຫະກອນຍັງພົບບັນຫາດ້ານການຕະຫຼາດກໍ່ຄື ກຸ່ມຜະລິດ ຫຼື ສະຫະກອນ ຍັງບໍ່ສາມາດຜະລິດໄດ້ທາງດ້ານປະລິມານ ແລະ ຄຸນນະພາບທີ່ຜູ້ບໍລິໂພກຕ້ອງການ.

# V. ສະຫຼຸບ

"ນິຍາມຂອງສະຫະກອນ" ແມ່ນການເຮັດວຽກຮ່ວມກັນ. ສະຫະກອນຜະລິດກະສິກຳ ແມ່ນການຈັດຕັ້ງວິສາຫະກິດລວມໝູ່ຂອງຊາວກະສິກອນທີ່ສະໝັກໃຈສ້າງຕັ້ງຂຶ້ນ ເພື່ອຮ່ວມມືຊ່ວຍເຫຼືອເຊິ່ງກັນ ແລະ ກັນ ໃນການຜະລິດກະສິກຳເປັນສິນຄ້າພ້ອມທັງໃຫ້ການບໍລິການ ດ້ານການສະໜອງປັດໃຈການຜະລິດ, ສິນເຊື່ອ ແລະ ຈຳໜ່າຍຜົນຜະລິດ, ລວມທັງການຮັບປະກັນທາງດ້ານສະຫວັດດີສັງຄົມ ລະຫວ່າງສະມາຊິກ ແລະຄອບຄົວສະມາຊິກດ້ວຍກັນ. ມີໂຄງປະກອບຂອງສະຫະກອນຄົບຊຸດຄື: ມີກອງປະຊຸມໃຫຍ່ຂອງສະມາຊິກສະຫະກອນ, ມີຄະນະກຳມະການບໍລິຫານສະຫະກອນ, ມີ ຄະນະກວດກາສະຫະກອນ, ມີຜູ້ຈັດການສະຫະກອນ, ມີພະນັກບັນຊີສະຫະກອນ ແລະ ມີພະນັກງານວິຊາການທີ່ຈຳເປັນ.

ຖ້າຫາກປະຕິບັດໄດ້ຕາມຫຼັກການ, ລະບຽບການໃນການຈັດຕັ້ງການ ແລະ ການເຄື່ອນໄຫວຂອງສະຫະກອນຜະລິດກະສິກຳ ແລະ ການບໍລິການລວມໝູ່ດ້ານກະສິກຳໃຫ້ເຕີບໃຫຍ່ຂະຫຍາຍຕົວ ມັນຈະກາຍເປັນຂະບວນຜະລິດສິນຄ້າ ແລະ ສ້າງລາຍຮັບສາມາດແກ້ໄຂຄວາມທຸກຍາກ ແລະ ຍົກລະດັບຊີວິດການເປັນຢູ່ຂອງຊາວກະສິກອນໃຫ້ດີຂຶ້ນພ້ອມທັງເປັນການປະກອບສ່ວນໃນການພັດທະນາເສດຖະກິດ-ສັງຄົມຂອງຊາດໃຫ້ເຂັ້ມແຂງ.

- ລະບົບໂຄງຮ່າງການຈັດຕັ້ງຂອງສະຫະກອນ ມາຮອດປະຈຸບັນມີຫຼາຍສະຫະກອນ ຢູ່ ໃນ ສປປ ລາວ ແມ່ນຖືວ່າຍັງບໍ່ສາມາດປະຕິບັດໄດ້ຕາມ "ນິຍາມ" ຫຼື ຂໍ້ກຳນົດສະຫະກອນຂອງລາວ, ຍົກເວັ້ນສະຫະກອນຜູ້ຜະລິດກາເຟເຂດພູພຽງບໍລິເວນ CPC ພຽງສະຫະກອນດຽວທີ່ມີໂຄງປະກອບສະຫະກອນຄົບຊຸດ (ມີກອງປະຊຸມຂອງສະຫະກອນ, ມີຄະນະກຳມະການບໍລິຫານສະຫະກອນ, ມີຄະນະກວດກາສະຫະກອນ, ມີ ຜູ້ຈັດການສະຫະກອນ, ມີນາຍບັນຊີສະຫະກອນ ແລະ ມີພະນັກງານວິຊາການທີ່ຈຳເປັນ) ແລະ ບຸກຄະລະກອນດັ່ງກ່າວແມ່ນໄດ້ມີການເຄື່ອນໄຫວຕາມສິດໜ້າທີ່ ແລະ ພາລະບົດບາດຂອງຕົນເອງ,
- ການຄຸ້ມຄອງການເງິນ: ທຸກສະຫະກອນ ຈະມີບັນຊີທະນາຄານ ແລະ ບັນຊີເງິນສົດ, ເງິນສ່ວນສ່ວນຫຼາຍແມ່ນເກັບຮັກໄວ້ຢູ່ໃນທະນາຄານ ການອະນຸມັດນຳໃຊ້ເງິນແມ່ນ ຄະນະກຳມະການບໍລິຫານສະຫະກອນເປັນຜູ້ຕັດສິນໃຈ. ການໝູນວຽນເງິນ(ການຈຳໜ່າຍຜົນຜະລິດພາຍໃນ) ສ່ວນໃຫຍ່ເປັນເງິນສົດ ມີພຽງການຈຳໜ່າຍຜົນຜະລິດອອກຕ່າງປະເທດ ເທົ່ານັ້ນທີ່ມີການຖອນເງິນຜ່ານທະນາຄານນອກຈາກ ດັ່ງຕົວຢ່າງ ສະຫະກອນ CPC ແລະ ສະຫະກອນໃຈກາເຟ.
- ກອງທຶນ ຂອງສະຫະກອນ ເຫັນວ່າຍັງແມ່ນຍັງມີໜ້ອຍ ບາງສະຫະກອນມີພຽງປະມານ 10,000,000 – 20,000,000 ກີບ ຊຶ່ງບໍ່ພຽງພໍໃນການນຳເດີນທຸລະກິດຂອງສະຫະກອນ ທີ່ເຊັ່ນການເກັບຊື້ຜົນຜະລິດຈາກສະມາຊິກກຸ່ມ, ການຊື້ປັດໃຈການຜະລິດມາແຈກຢາຍໃຫ້ສະມາຊິກໄດ້ທົ່ວເຖິງ.
- ການຕະຫຼາດ: ທຸກສະຫະກອນ ສ່ວນຫຼາຍແມ່ນມີບັນຫາກ່ຽວກັບຕະຫຼາດຈຳໜ່າຍຜົນຜະລິດຂອງສະຫະກອນ ຊຶ່ງມັນມາຈາກຫຼາຍສາຍເຫດຄື: 1) ສະຫະກອນຂາດຂໍ້ມູນຂ່າວສານດ້ານຕະຫຼາດ, 2) ການຜະລິດຂອງຊາວກະສິກອນ (ສະມາຊິກສະຫະກອນ) ບໍ່ໄດ້ມາດຖານຂອງຜູ້ບໍລິໂພກ, ສະຫະກອນຂາດທຶນ ແລະ ອຸປະກອນປຸງແຕ່ງ ຫຼື ແປຮູບຕາມລູກຄ້າຕ້ອງການ, 4) ຂາດທຶນໃນການເກັບຊື້ຜົນຜະລິດຈາກສະມາຊິກ, ບໍ່ມີການເຮັດສັນຍາຊື້-ຂາຍຢ່າງເປັນລະບົບ.
- ການແບ່ງປັນຜົນປະໂຫຍດ ຈາກການດຳເນີນທຸລະກິດຂອງສະຫະກອນ ເຫັນວ່າຍັງມີໜ້ອຍ ບາງສະຫະກອນແມ່ນບໍ່ມີເລີຍ ຜົນປະໂຫຍດທີ່ສະມາຊິກສະຫະກອນໄດ້ຮັບປະຈຸບັນມີພຽງ 2 ສະຫະ

ກອນ ເທົ່າທີ່ໄດ້ຂາຍຜົນຜະລິດ ໃນລາຄາທີ່ສູງກວ່າລາຄາທ້ອງຕະຫຼາດ ພ້ອມທັງໄດ້ຮັບເງິນບໍາເນັດຜົນ ເສດຈາກການເຮັດການຄ້າທີ່ເປັນທໍາ.

- ສິ່ງທີ່ທ້າຍທີ່ພົບເຫັນໃນປະຈຸບັນກ່ຽວກັບການສົ່ງເສີມ ແລະ ການເຄື່ອນໄຫວວຽກງານສະຫະກອນຢູ່ໃນສປປລາວ ໃນປະຈຸບັນຄື:
  1) ຄວາມພ້ອມຄວາມເຂົ້າໃຈຂອງຊາວກະສິກອນ ຕໍ່ກັບວຽກງານສະຫະກອນແມ່ນຍັງມີໜ້ອຍ,
  2) ຄວາມຮູ້ຄວາມສາມາດ ແລະ ປະສົບການຂອງຕ່າງໜ້າຊາວກະສິກອນ ທີ່ເຂົ້າມາເປັນຄະນະບໍລິຫານສະຫະກອນ ຍັງຈໍາກັດ.
  3) ພະນັກງານວິຊາການຜູ້ທີ່ມີຄວາມຮູ້ ແລະ ປະສົບການ ກ່ຽວກັບວຽກງານສະຫະກອນແມ່ນຍັງມີໜ້ອຍ.
  4) ທຶນຂອງພາກລັດໃນການຊຸກຍູ້ສົ່ງເສີມ, ຕິດຕາມກວດກາວຽກງານສະຫະກອນ ແມ່ນຍັງມີຈໍານວນຈໍາກັດ.
  5) ຍັງຂາດຄະນະກໍາມະການພັດທະນາຊຸກຍູ້ສົ່ງເສີມການຈັດຕັ້ງສະຫະກອນລະດັບຊາດ

## VI. ຂໍ້ສະເໜີແນະ ແລະ ແນວຄວາມຄິດໃນການສົ່ງເສີມວຽກງານສະຫະກອນໃນຕໍ່ໜ້າ.

ເພື່ອຈະສົ່ງເສີມການສ້າງຕັ້ງ, ການເຄື່ອນໄຫວ ແລະ ການຄຸ້ມຄອງສະຫະກອນ ຢູ່ໃນ ສປປ ລາວ ໃຫ້ປະສົບຜົນສໍາເລັດ ແລະ ມີຄວາມຍືນຍົງແມ່ນມີຄວາມຈໍາເປັນຫຼາຍ ເນື່ອງຈາກວ່າການສ້າງຕັ້ງສະຫະກອນແມ່ນຈະເຮັດໃຫ້ຜູ້ປະກອບທຸລະກິດຮ່ວມໝູ່ຂະໜາດນ້ອຍມີກໍາລັງແຮງລວມສູນ, ມີການຮ່ວມມືຊ່ວຍເຫຼືອເຊິ່ງກັນ ແລະ ກັນໃຫ້ມີຄວາມເຕີບໃຫຍ່ຂະຫຍາຍຕົວ ເປັນການຜະລິດສິນຄ້າ ສ້າງລາຍໄດ້ ເພື່ອປະກອບສ່ວນເຂົ້າໃນການແກ້ໄຂຄວາມທຸກຍາກ ແລະ ຍົກລະດັບຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່າໃຫ້ດີຂຶ້ນ. ສະນັ້ນ, ເພື່ອໃຫ້ບັນລຸຈຸດປະສົງ ແລະ ເປົ້າໝາຍດັ່ງກ່າວນີ້ມັນມີຄວາມຈໍາເປັນຕ້ອງໄດ້ມີການປັບປຸງແກ້ໄຂ ບັນດາຂໍ້ຄ້າງທີ່ກ່າວມາຂ້າງເຖິງນີ້ໃຫ້ເປັນຮູບປະທໍາດັ່ງລຸ່ມນີ້:

- ດ້ານນິຕິກໍາສະເໜີໃຫ້ພາກສ່ວນທີ່ກ່ຽວຂ້ອງຄົ້ນຄວ້າພິຈາລະນາໃຫ້ມີກົດໝາຍວ່າດ້ວຍການຄຸ້ມຄອງ ແລະ ສົ່ງເສີມວຽກງານສະຫະກອນ;
- ດ້ານນະໂຍບາຍສົ່ງເສີມຂອງລັດຕໍ່ສະຫະກອນກະສິກໍາ ສະເໜີໃຫ້ພາກສ່ວນທີ່ກ່ຽວຂ້ອງຄົ້ນຄວ້າ ສ້າງເປັນນິຕິກໍາຈະແຈ້ງ ແລະ ຊັດເຈັນທີ່ສາມາດປະຕິບັດໄດ້ ເຊັ່ນຕົວຢ່າງ:
  - o ການສ້າງເງື່ອນໄຂໃຫ້ມີຄວາມສາມາດແຂ່ງຂັນ ແລະ ເຂົ້າເຖິງຕະຫຼາດຄວນມອບໃຫ້ພາກສ່ວນໃດໜຶ່ງເປັນຜູ້ຮັບຜິດຊອບຢ່າງຂາດຕົວ, ມີນະໂຍບາຍຫຍັງແດ່?, ມີງົບປະມານເທົ່າໃດ?
  - o ການສ້າງເງື່ອນໄຂອໍານວຍຄວາມສະດວກ ເພື່ອຊ່ວຍດ້ານຕ່າງໆ ເຊັ່ນ: ແຫຼ່ງທຶນສໍາລັບສະໜັບສະໜູນສະຫະກອນ ມາແຕ່ໃສ? ພາກສ່ວນໃດຮັບຜິດຊອບ? ກໍານົດເທົ່າໃດ? ອັດຕາດອກເບ້ຍເທົ່າໃດ ແລະ ມີເງື່ອນໄຂສະເພາະແນວໃດ ເພື່ອໃຫ້ສະຫະກອນສາມາດກູ້ຢືມເງິນໄດ້ແທ້.
  - o ນະໂຍບາຍດ້ານພາສີ-ອາກອນ ມີແນວໃດສໍາລັບສະຫະກອນທີ່ສ້າງໃໝ່ ແລະ ສະຫະກອນທີ່ດໍາເນີນທຸລະກິດ ແລະ ມີລາຍຮັບແລ້ວ.

- ຕ້ອງມີການປັບປຸງກົນໄກການປະສານສົມທົບ ແລະ ການເຊື່ອມໂຍ່ງ ລະຫວ່າງສະຫະກອນຕ່າງໆ ລວມທັງການແລກປ່ຽນບົດຮຽນ ແລະ ສິນຄ້າລະຫວ່າງສະຫະກອນຕ່າງໆດ້ວຍກັນ (ປະຈຸບັນມີໜ້ອຍຫຼາຍ). ສະນັ້ນ, ສະເໜີໃຫ້ພາກສ່ວນທີ່ກ່ຽວຂ້ອງສ້າງແຜນ ແລະຊອກຫາແຫຼ່ງທຶນໃນການຈັດກອງປະຊຸມເພື່ອແລກປ່ຽນ

ບົດຮຽນດ້ານການຈັດຕັ້ງປະຕິບັດ ແລະ ຖ້າເປັນໄປໄດ້ແມ່ນສ້າງແຜນດໍາເນີນທຸລະກິດຮ່ວມກັນ ເພື່ອແກ້ໄຂບັນຫາ ດ້ານຕ່າງໆຮ່ວມກັນ.

- ສ້າງຄວາມສາມາດໃຫ້ຄະນະກໍາມະການບໍລິຫານສະຫະກອນ ດ້ວຍຮູບແບບຕ່າງໆເຊັ່ນ: ຝຶກອົບຮົມ ແລະໄປທັດສະນະສຶກສາ ກ່ຽວກັບການຄຸ້ມຄອງບໍລິຫານກຸ່ມ ຫຼື ສະຫະກອນ. ບັນຫານີ້ແມ່ນມີຄວາມຈໍາເປັນທີ່ສຸດສໍາລັບທຸກສະຫະກອນ.
- ແຕ່ລະສະຫະກອນຕ້ອງສ້າງ ຫຼື ຈ້າງຜູ້ຈັດການສະຫະກອນທີ່ມີຄວາມສາມາດ ແລະ ເປັນສີມືອາຊີບມາບໍລິຫານຈັດການຢູ່ໃນສະຫະກອນ ເພື່ອຮັບປະກັນໃຫ້ແກ່ການດໍາເນີນກິດຈະການຂອງສະຫະກອນໃຫ້ປະສົບຜົນສໍາເລັດ ແລະ ມີປະສິດທິພາບ.
- ທຸລະກິດ ແລະ ຜະລິດຕະພັນຂອງສະຫະກອນຕ້ອງອີງໃສ່ຄວາມຕ້ອງການຂອງຕະຫຼາດ ຫຼາຍກວ່າຄວາມມັກຂອງສະມາຊິກ.
- ຄະນະກໍາມະການບໍລິຫານສະຫະກອນ ຕ້ອງລົງໄປໃກ້ຊິດຕິດແທດກັບສະມາຊິກ ພ້ອມທັງເຜີຍແຜ່ເຊື່ອມຊຶມກ່ຽວກັບຫຼັກການ ແລະ ອຸດົມການຂອງສະຫະກອນ ໃຫ້ສະມາຊິກເຂົ້າໃຈ ແລະ ເຫັນຜົນປະໂຫຍດຂອງສະມາຊິກແນໃສ່ການສ້າງກອງທຶນຮັບໃຊ້ພາຍໃນສະຫະກອນເອງ ດ້ວຍການເອົາຜົນຜະລິດມາຮ່ວມກັນຂາຍແລ້ວຫັກເອົາກໍາໄລຈໍານວນໃດໜຶ່ງ ເພື່ອປະກອບເປັນກອງທຶນ ແລະບໍ່ຕ້ອງອີງໃສ່ການ ກູ້ຢືມຈາກທະນາຄານ, ສະຫະກອນຈຶ່ງຈະສາມາດຮັບປະກັນໄດ້ວ່າເປັນສະຫະກອນທີ່ແທ້ຈິງ ໂດຍບໍ່ເອື່ອຍອີງພາຍນອກ.
- ພາກສ່ວນທີ່ເອື້ອອໍານວຍໃນການສ້າງຕັ້ງສະຫະກອນ ຄວນຫຼີກລ່ຽງໃນການບອກໃຫ້ກຸ່ມສ້າງຕັ້ງເປັນສະຫະກອນ ໂດຍບໍ່ຄໍານຶງເຖິງຄວາມພ້ອມຕົວຈິງຂອງກຸ່ມດັ່ງກ່າວ ຊຶ່ງອາດກໍ່ໃຫ້ເກີດຄວາມສ່ຽງໃນການລົ້ມລະລາຍພາຍຫຼັງການສ້າງຕັ້ງ 2-3ປີ ຫຼື ຫຼັງຈາກການສະໜັບສະໜູນຈາກທາງນອກສິ້ນສຸດລົງ.
- ລັດຄວນສະໜັບສະໜູນ ແລະ ສຸມສ້າງຕົວແບບສະຫະກອນ ທີ່ມີຄວາມຕ້ອງການພັດທະນາຕົນເອງໃຫ້ກາຍເປັນສະຫະກອນຕົວແບບໃນທຸກດ້ານເຊັ່ນ: ຄວາມເປັນເຈົ້າການ, ຄວາມສະໝັກໃຈ ແລະ ການດໍາເນີນທຸລະກິດຕ້ອງບົນພື້ນຖານການມີສ່ວນຮ່ວມຂອງສະມາຊິກທັງໝົດ.
- ລັດຖະບານ ຄວນມີຍຸດທະສາດໃນໄລຍະຍາວໃນການຊ່ວຍສະໜັບສະໜູນສະຫະກອນຜະລິດກະສິກໍາເນື່ອງຈາກວ່າຈໍານວນຊາວກະສິກອນຫຼາຍກວ່າ70% ຂອງພົນລະເມືອງລາວທັງໝົດຊຶ່ງເປັນກອງໜູນພິເສດໃຫ້ແກ່ຄວາມໝັ້ນຄົງດ້ານສະບຽງອາຫານແລະໂພສະນາການຂອງຊາດ.
- ສ້າງ ຫຼື ແຕ່ງຕັ້ງໃຫ້ມີຄະນະພັດທະນາຊຸກຍູ້ສົ່ງເສີມການຈັດຕັ້ງສະຫະກອນລະດັບຊາດ ເພື່ອເຮັດໜ້າທີ່ສ້າງກົດໝາຍ ແລະ ນິຕິກໍາຕ່າງໆ ທີ່ກ່ຽວຂ້ອງ.